**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ..໒໙໘໕.../ກປ
ນະຄອນຫຼວງວຽງຈັນ, ວັນທີ..໒໘.ມິຖຸນາ 2019

# ຂໍ້ຕົກລົງ
## ວ່າດ້ວຍ ມາດຕະການສຸຂານາໄມພືດ ສຳລັບການນຳເຂົ້າ ແລະ ສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ

- ອີງຕາມ ກົດໝາຍ ວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ (ສະບັບປັບປຸງ) ສະບັບເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 99/ນຍ, ລົງວັນທີ 09 ມີນາ 2017;
- ອີງຕາມ ໜັງສືສະເໜີ ຂອງກົມປູກຝັງ ສະບັບເລກທີ 1045/ກປຝ, ລົງວັນທີ 22 ພຶດສະພາ 2019.

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ຂັ້ນຕອນ, ວິທີການ ແລະ ມາດຕະການ ກ່ຽວກັບ ເງື່ອນໄຂດ້ານສຸຂານາໄມພືດ ສຳລັບການນຳເຂົ້າ, ການກວດກາກ່ອນມາເຖິງດ່ານ ແລະ ປະຈຳດ່ານກັກກັນພືດ, ການກວດກາພາຍຫຼັງການນຳເຂົ້າ, ການສົ່ງຜ່ານ ເພື່ອຄຸ້ມຄອງສຸຂານາໄມພືດສຳລັບການນຳເຂົ້າ ແລະ ການສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ແນໃສ່ສະກັດກັ້ນການນຳເຂົ້າ ແລະ ແຜ່ລະບາດ ສັດຕູພືດຈາກພາຍນອກເຂົ້າມາຍັງ ສປປ ລາວ ແລະ ອຳນວຍຄວາມສະດວກທາງດ້ານການຄ້າ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ມາດຕະການສຸຂານາໄມພືດ ສຳລັບການນຳເຂົ້າ ແລະ ສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ**

ມາດຕະການສຸຂານາໄມພືດ ສຳລັບການນຳເຂົ້າ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ແມ່ນການຈັດຕັ້ງປະຕິບັດລະບຽບການ ຫຼື ວິທີການປະຕິບັດດ້ານສຸຂານາໄມພືດ ຕາມເງື່ອນໄຂດ້ານສຸຂານາໄມ

ພືດສຳລັບການນຳເຂົ້າທີ່ເປັນທາງການ ເພື່ອສະກັດກັ້ນການເຂົ້າມາ ຫຼື ການແຜ່ລະບາດຂອງສັດຕູພືດຄວບຄຸມ ຊຶ່ງອາດສ້າງຜົນກະທົບທາງດ້ານເສດຖະກິດໃນ ສປປ ລາວ.

ມາດຕະການສຸຂານາໄມພືດ ສຳລັບການສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ແມ່ນການຈັດຕັ້ງປະຕິບັດລະບຽບການ ຫຼື ວິທີການປະຕິບັດດ້ານສຸຂານາໄມພືດ ສຳລັບການນຳສົ່ງຊຸດສິນຄ້າ ຜ່ານ ສປປ ລາວ ໄປຍັງປະເທດທີສາມ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຊີວະພາບປາບສັດຕູພືດ** ໝາຍເຖິງ ສັດຕູພືດທຳມະຊາດ, ສິ່ງມີຊີວິດທີ່ເປັນປໍລະປັກ, ຕໍ່ສູ້ ຫຼື ສິ່ງມີຊີວິດອື່ນ ທີ່ຖືກນຳໃຊ້ໃນການຄວບຄຸມສັດຕູພືດ;
2. **ເງື່ອນໄຂການນຳເຂົ້າ** ໝາຍເຖິງ ລະບຽບການທີ່ສ້າງຂຶ້ນ ໂດຍອົງການຄຸ້ມຄອງວຽກງານປ້ອງກັນ ແລະ ກັກກັນພືດ ເພື່ອຄວບຄຸມວັດຖຸຕ້ອງຄວບຄຸມທີ່ນຳເຂົ້າມາໃນ ສປປ ລາວ;
3. **ໃບອະນຸຍາດນຳເຂົ້າດ້ານສຸຂານາໄມພືດ** ໝາຍເຖິງ ເອກະສານທາງການທີ່ອອກໃຫ້ໂດຍອົງການຄຸ້ມຄອງວຽກງານປ້ອງກັນ ແລະ ກັກກັນພືດ ເພື່ອອະນຸຍາດນຳເຂົ້າຊຸດສິນຄ້າ ຕາມຂໍ້ກຳນົດເງື່ອນໄຂທີ່ກຳນົດໄວ້;
4. **NPPO (National Plant Protection Organization)** ໝາຍເຖິງ ກົມປູກຝັງ ຊຶ່ງເປັນຕົວແທນໃຫ້ອົງການປ້ອງກັນພືດແຫ່ງຊາດ ຂອງ ສປປ ລາວ ທີ່ກຳນົດໄວ້ໃນ ມາດຕາ IV ຂອງ IPPC;
5. **IPPC (International Plant Protection Convention)** ໝາຍເຖິງ ສົນທິສັນຍາປ້ອງກັນພືດສາກົນ (ສະບັບປັບປຸງປີ 1997);
6. **ISPM 15 (The International Standard for Phytosanitary Measure Number 15)** ໝາຍເຖິງ ມາດຕະຖານສາກົນດ້ານມາດຕະການສຸຂານາໄມພືດ ສະບັບເລກທີ 15 ຂອງສົນທິສັນຍາປ້ອງກັນພືດສາກົນ ວ່າດ້ວຍການຄວບຄຸມວັດສະດຸຫຸ້ມຫໍ່ທີ່ເຮັດດ້ວຍໄມ້ໃນການຄ້າສາກົນ;
7. **ສິ່ງມີຊີວິດທີ່ຖືກດັດແປງພັນທຸກຳ ຫຼື LMO (Living modified organism)** ໝາຍເຖິງ ສິ່ງມີຊີວິດ ທີ່ຜ່ານຂະບວນການທາງພັນທຸກຳ ໂດຍນຳໃຊ້ເຕັກໂນໂລຊີຊີວະພາບສະໄໝໃໝ່.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ກ່ຽວຂ້ອງກັບການນຳເຂົ້າ ແລະ ສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ໃນ ສປປ ລາວ.

## ໝວດທີ 2
## ເງື່ອນໄຂດ້ານສຸຂານາໄມພືດສຳລັບການນຳເຂົ້າ

**ມາດຕາ 5 ເງື່ອນໄຂດ້ານສຸຂານາໄມພືດ ສຳລັບການນຳເຂົ້າ**

ເງື່ອນໄຂດ້ານສຸຂານາໄມພືດ ສຳລັບການນຳເຂົ້າ ແມ່ນບັນດາຂໍ້ກຳນົດ ກ່ຽວກັບ ລະບຽບການນຳເຂົ້າພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ອອກໂດຍກະຊວງກະສິກຳ ແລະ ປ່າໄມ້ ຊຶ່ງປະກອບດ້ວຍເງື່ອນໄຂລວມ, ເງື່ອນໄຂສະເພາະ ແລະ ມາດຕະການອື່ນ ທີ່ກ່ຽວຂ້ອງກັບການນຳເຂົ້າ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ.

**ມາດຕາ 6 ເງື່ອນໄຂລວມ ສຳລັບການນຳເຂົ້າ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ**

ນອກຈາກການປະຕິບັດມາດຕະການສຸຂານາໄມພືດ ສຳລັບການນຳເຂົ້າພືດ ຕາມທີ່ກຳນົດໄວ້ໃນ ມາດຕາ 30 ຂອງກົດໝາຍວ່າດ້ວຍການປ້ອງກັນ ແລະ ກັກກັນພືດ (ສະບັບປັບປຸງ) ສະບັບເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016 ແລ້ວ, ຍັງຕ້ອງຮັບປະກັນຫຼັກການລວມໃນການນຳເຂົ້າ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ດັ່ງນີ້:

1. ມີໃບອະນຸຍາດນຳເຂົ້າ ອອກໃຫ້ໂດຍກົມປູກຝັງ;
2. ໃບອະນຸຍາດນຳເຂົ້າໜຶ່ງສະບັບ ແມ່ນນຳໃຊ້ໄດ້ສຳລັບຊຸດສິນຄ້າທີ່ມີ ພືດ ແລະ ຜະລິດຕະພັນພືດ ຊະນິດດຽວກັນ ຫຼື ມີຫຼາຍຊະນິດ ແຕ່ຕ້ອງມາຈາກແຫຼ່ງກຳເນີດດຽວກັນ ແລະ ສົ່ງອອກໄປພ້ອມກັນ;
3. ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ບໍ່ມີການຕິດແປດສັດຕູພືດຄວບຄຸມ;
4. ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ສອດຄ່ອງກັບກົດໝາຍ ແລະ ລະບຽບການດ້ານສຸຂານາໄມພືດ ຂອງ ສປປ ລາວ;
5. ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ຖືກຕາມເງື່ອນໄຂດ້ານສຸຂານາໄມພືດສະເພາະທີ່ໄດ້ກຳນົດໄວ້ ແລະ ຕາມການຕົກລົງຂອງອົງການປ້ອງກັນພືດແຫ່ງຊາດ (NPPOs) ຂອງສອງຝ່າຍ ຕາມມາດຕະຖານສາກົນ ຂອງອົງການປ້ອງກັນພືດສາກົນ (IPPC);
6. ມີໃບຢັ້ງຢືນສຸຂານາໄມພືດ ອອກໃຫ້ໂດຍອົງການປ້ອງກັນພືດແຫ່ງຊາດ ຂອງປະເທດຕົ້ນທາງ;
7. ສຳລັບ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ນຳເຂົ້າທາງໄປສະນີ ຫຼື ຂົນສົ່ງທາງອາກາດ ຕ້ອງມີສະຫຼາກ, ຂໍ້ຄວາມ ຫຼື ເຄື່ອງໝາຍຕິດໄປພ້ອມ ຕາມບົດແນະນຳຂອງກົມປູກຝັງ;
8. ຜ່ານການກວດກາ, ທົດສອບ ແລະ ບຳບັດກ່ອນການສົ່ງອອກ ຈາກປະເທດຕົ້ນທາງໃນກໍລະນີທີ່ກຳນົດໃຫ້;
9. ສະພາບຄວາມຖືກຕ້ອງຄົບຖ້ວນ ຂອງວັດຖຸຕ້ອງຄວບຄຸມໄດ້ຮັບການຮັກສາ ແລະ ເກັບໄວ້ໃນສະພາບເດີມ ພາຍຫຼັງການຢັ້ງຢືນຈາກປະເທດຕົ້ນກຳເນີດ.

ສຳລັບ ການນຳເຂົ້າວັດຖຸຕ້ອງຄວບຄຸມ ທີ່ຢູ່ໃນບັນຊີ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ຕ້ອງຂໍອະນຸຍາດນຳເຂົ້າ ຕ້ອງຜ່ານການວິໄຈຄວາມສ່ຽງສັດຕູພືດ ແລະ ປະຕິບັດຕາມເງື່ອນໄຂສະເພາະ ທີ່ກົມປູກຝັງ ກຳນົດ.

ການນຳເຂົ້າ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ເພື່ອຮັບໃຊ້ວຽກງານດ້ານສຸຂານາໄມພືດ, ການຄົ້ນຄວ້າທົດລອງທາງດ້ານວິທະຍາສາດ ຫຼື ກໍລະນີສຸກເສີນອື່ນ ຕ້ອງໄດ້ຮັບອະນຸຍາດ ຈາກກົມປູກຝັງ ໃນປະລິມານທີ່ຈຳກັດຕາມເງື່ອນໄຂ ແລະ ມາດຕະຖານດ້ານຄວາມປອດໄພ.

ກໍລະນີ ມີການສະເໜີນຳໃຊ້ມາດຕະການສຸຂານາໄມພືດອື່ນ ໂດຍອົງການປ້ອງກັນພືດແຫ່ງຊາດ (NPPO) ຂອງປະເທດສົ່ງອອກ ຕ້ອງຮັບປະກັນວ່າມາດຕະການດັ່ງກ່າວ ມີຄວາມເທົ່າທຽມກັນໃນການປ້ອງກັນສັດຕູພືດ ຄືກັບຂໍ້ກຳນົດເງື່ອນໄຂດ້ານສຸຂານາໄມພືດ ຂອງ ສປປ ລາວ.

**ມາດຕາ 7 ເງື່ອນໄຂສະເພາະ ສຳລັບການຂົນສົ່ງ ແລະ ວັດສະດຸຫຸ້ມຫໍ່**

ເຈົ້າຂອງ ຫຼື ຜູ້ດຳເນີນການຂົນສົ່ງ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ຕ້ອງປະຕິບັດການບຳບັດ ໃຫ້ສອດຄ່ອງກັບມາດຕະຖານ ທີ່ກົມປູກຝັງ ກຳນົດ.

ວັດສະດຸຫຸ້ມຫໍ່ດ້ວຍໄມ້ ທີ່ບໍ່ທັນໄດ້ຜ່ານການປຸງແຕ່ງ ຫຼື ຍັງເປັນວັດຖຸດິບ ຕ້ອງໄດ້ຜ່ານການບຳບັດ ຕາມມາດຕະຖານທີ່ກຳນົດໄວ້ ແລະ ຕ້ອງໄດ້ຈ້ຳກາ ໃຫ້ສອດຄ່ອງກັບຂໍ້ກຳນົດເງື່ອນໄຂດ້ານສຸຂານາໄມພືດ

ຕາມມາດຕະຖານສາກົນ ດ້ານມາດຕະການສຸຂານາໄມພືດ ສະບັບເລກທີ 15 (ISPM 15) ແລະ ມີໃບຢັ້ງຢືນຜ່ານການບໍາບັດ ຕາມທີ່ກໍານົດໄວ້.

ເສດພືດ ຫຼື ເຟືອງ ທີ່ນໍາໃຊ້ໃນການຫຸ້ມຫໍ່ວັດຖຸຕ້ອງຄວບຄຸມ ຕ້ອງໄດ້ຜ່ານການບໍາບັດຕາມມາດຕະຖານທີ່ກໍານົດໄວ້ ແລະ ຕ້ອງລະບຸໄວ້ໃນໃບຢັ້ງຢືນສຸຂານາໄມພືດ.

**ມາດຕາ 8 ເງື່ອນໄຂສະເພາະ ສໍາລັບການນໍາເຂົ້າຊີວະພາບປາບສັດຕູພືດ ແລະ ສິ່ງມີຊີວິດທີ່ຖືກດັດແປງພັນທຸກໍາ**

ການນໍາເຂົ້າຊີວະພາບປາບສັດຕູພືດ ແລະ ສິ່ງມີຊີວິດທີ່ຖືກດັດແປງພັນທຸກໍາ ຕ້ອງຜ່ານການວິໄຈຄວາມສ່ຽງສັດຕູພືດກ່ອນການນໍາເຂົ້າ ຫຼື ກ່ອນການນໍາໃຊ້ ພ້ອມທັງຮັບປະກັນໃຫ້ສອດຄ່ອງກັບຂໍ້ກໍານົດເງື່ອນໄຂດ້ານຄວາມປອດໄພ ທີ່ຂະແໜງການກ່ຽວຂ້ອງກໍານົດ.

**ມາດຕາ 9 ເງື່ອນໄຂສະເພາະ ສໍາລັບການນໍາເຂົ້າ ພືດຜັກ ແລະ ໝາກໄມ້ສົດ**

ກົມປູກຝັງ, ພະແນກກະສິກໍາ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ແລະ ດ່ານກັກກັນພືດ ຕ້ອງຄຸ້ມຄອງ ແລະ ກວດກາການນໍາເຂົ້າ ພືດຜັກ ແລະ ໝາກໄມ້ສົດ ໃຫ້ສອດຄ່ອງຕາມມາດຕະຖານຄວາມປອດໄພຂອງອາຫານ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ. ສ່ວນຂັ້ນຕອນລະອຽດ ໄດ້ກໍານົດໄວ້ໃນບົດແນະນໍາ ຂອງກົມປູກຝັງ.

**ມາດຕາ 10 ການກວດກາລະບົບສຸຂານາໄມພືດຮ່ວມກັບປະເທດຄູ່ຄ້າ**

ກົມປູກຝັງ ໃນນາມເປັນອົງການປ້ອງກັນພືດແຫ່ງຊາດ (NPPO) ຂອງ ສປປ ລາວ ສາມາດຮ່ວມມືກັບ ພາກພື້ນ ແລະ ສາກົນ ໃນການກວດກາດ້ານສຸຂານາໄມພືດ ບົນພື້ນຖານການຕົກລົງຂອງລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້.

**ມາດຕາ 11 ການຈໍາກັດການນໍາເຂົ້າ ວັດຖຸຕ້ອງຄວບຄຸມ**

ການຈໍາກັດການນໍາເຂົ້າ ວັດຖຸຕ້ອງຄວບຄຸມ ແມ່ນການອະນຸຍາດໃຫ້ການນໍາເຂົ້າ ວັດຖຸຕ້ອງຄວບຄຸມສະເພາະໃດໜຶ່ງ ຕາມຫຼັກການ, ວິທີການ ແລະ ເງື່ອນໄຂທີ່ ກະຊວງກະສິກໍາ ແລະ ປ່າໄມ້ ກໍານົດໃນແຕ່ລະໄລຍະ ບົນພື້ນຖານການວິໄຈຄວາມສ່ຽງສັດຕູພືດ ແລະ ຢັ້ງຢືນທາງດ້ານວິທະຍາສາດ ລວມທັງການພິຈາລະນາຂໍ້ມູນ ດ້ານເສດຖະກິດ ແລະ ສິ່ງແວດລ້ອມ.

ບັນຊີ ວັດຖຸຕ້ອງຄວບຄຸມ ທີ່ຈໍາກັດການນໍາເຂົ້າ ຕ້ອງໂຄສະນາເຜີຍແຜ່ຜ່ານສື່ຕ່າງໆ ພ້ອມທັງຕິດປະກາດໄວ້ຢູ່ດ່ານນໍາເຂົ້າ ເພື່ອໃຫ້ສາທາລະນະຊົນ ໄດ້ຮັບຊາບຢ່າງກວ້າງຂວາງ.

**ມາດຕາ 12 ການປະຕິບັດຕໍ່ວັດຖຸຕ້ອງຄວບຄຸມ ກ່ອນການນໍາເຂົ້າ ແລະ ລະຫວ່າງການນໍາເຂົ້າ**

ກ່ອນການນໍາເຂົ້າ ຫຼື ລະຫວ່າງການນໍາເຂົ້າ ວັດຖຸຕ້ອງຄວບຄຸມທີ່ຢູ່ໃນບັນຊີ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມທີ່ຕ້ອງຂໍອະນຸຍາດນໍາເຂົ້າ ຕ້ອງໄດ້ຜ່ານການປະຕິບັດດ້ານສຸຂານາໄມພືດຈາກປະເທດສົ່ງອອກ ໂດຍໄດ້ຮັບການຢັ້ງຢືນຈາກອົງການປ້ອງກັນພືດແຫ່ງຊາດ (NPPO) ຂອງປະເທດສົ່ງອອກ ດັ່ງນີ້:

1. ໄດ້ຜ່ານການກວດກາ, ທົດສອບ ແລະ ບໍາບັດ;
2. ການຜະລິດພືດ ພາຍໃຕ້ສະພາບດ້ານສຸຂານາໄມພືດທີ່ກໍານົດໃຫ້ ເຊັ່ນ: ການປູກພືດທີ່ຜ່ານການທົດສອບຫາເຊື້ອໄວຣັດ ຫຼື ພາຍໃຕ້ເງື່ອນໄຂກໍານົດສະເພາະ;
3. ມີການກວດກາ ແລະ ທົດສອບໃນລະດູການປູກກ່ອນການສົ່ງອອກ ຕົ້ນກໍາເນີດຂອງຊຸດສິນຄ້າທີ່ມາຈາກພື້ນທີ່ຜະລິດປອດສັດຕູພືດ, ເຂດຜະລິດປອດສັດຕູພືດ ຫຼື ເຂດສັດຕູພືດເກີດຂຶ້ນຕໍ່າ;

4. ມີວິທີການປະຕິບັດທີ່ຖືກຕ້ອງ ແລະ ໄດ້ຜ່ານການຮັບຮອງຢ່າງເປັນທາງການ ຂອງປະເທດສົ່ງອອກ;
5. ຮັກສາສະພາບຄວາມຄົບຖ້ວນຂອງຊຸດສິນຄ້າ;
6. ໃນລະຫວ່າງການຂົນສົ່ງ ຕ້ອງຮັກສາຄວາມຄົບຖ້ວນຂອງສິນຄ້າ ແລະ ປະຕິບັດມາດຕະການອື່ນທີ່ຈໍາເປັນ ໂດຍສະເພາະການກວດກາຢູ່ປະເທດຕົ້ນກໍາເນີດ ຫຼື ດ່ານນໍາເຂົ້າ.

ເພື່ອເຮັດໃຫ້ຂະບວນການ ແລະ ຂັ້ນຕອນ ການວິໄຈຄວາມສ່ຽງສັດຕູພືດ ດໍາເນີນໄປຕາມຫຼັກວິຊາການ, ກົມປູກຝັງ ອາດຈະແຕ່ງຕັ້ງເຈົ້າໜ້າທີ່ກັກກັນພືດ ໄປກວດກາພິສູດຄືນຢູ່ປະເທດຕົ້ນກໍາເນີດ, ຕິດຕາມປະເມີນການບໍາບັດກ່ອນ ຫຼື ຫຼັງການເກັບກ່ຽວ, ກວດກາທາງດ້ານກັກກັນພືດ ແລະ ຢັ້ງຢືນໂຮງເຮືອນ, ຫຸ້ມຫໍ່ບັນຈຸ ແລະ ຂັ້ນຕອນປະຕິບັດອື່ນທີ່ເຫັນວ່າມີຄວາມຈໍາເປັນ. ຄ່າໃຊ້ຈ່າຍຕ່າງໆໃນການຈັດຕັ້ງປະຕິບັດທັງໝົດ ແມ່ນເປັນຄວາມຮັບຜິດຊອບຂອງຜູ້ປະກອບການ ຫຼື ຜູ້ສົ່ງອອກ.

**ມາດຕາ 13 ສະຫຼາກ ແລະ ການຕິດສະຫຼາກ**

ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ໂດຍສະເພາະ ການນໍາເຂົ້າພືດ ທີ່ເປັນແນວພັນ, ເຊື້ອພັນພືດ ຫຼື ສິ່ງເນົ່າເປື່ອຍງ່າຍ ແລະ ມີຄວາມສ່ຽງສູງ ຕ້ອງຕິດສະຫຼາກ ຫຼື ຂໍ້ຄວາມ ໃຫ້ສອດຄ່ອງຕາມຂໍ້ກໍານົດເງື່ອນໄຂດ້ານສຸຂານາໄມພືດ.

ສໍາລັບລາຍລະອຽດ ກ່ຽວກັບ ຮູບແບບ, ເນື້ອໃນ ແລະ ວິທີການຕິດສະຫຼາກ ໄດ້ກໍານົດໄວ້ໃນບົດແນະນໍາ ຂອງກົມປູກຝັງ.

**ມາດຕາ 14 ການອອກໃບອະນຸຍາດນໍາເຂົ້າ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ຢູ່ໃນບັນຊີຕ້ອງຂໍອະນຸຍາດນໍາເຂົ້າ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງນໍາເຂົ້າພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ຢູ່ໃນບັນຊີຕ້ອງຂໍອະນຸຍາດນໍາເຂົ້າ ຕາມທີ່ໄດ້ກໍານົດໄວ້ໃນວັກສອງຂອງ ມາດຕາ 31 ຂອງກົດໝາຍວ່າດ້ວຍການປ້ອງກັນ ແລະ ກັກກັນພືດ (ສະບັບປັບປຸງ) ເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016 ຕ້ອງຍື່ນໃບຄໍາຮ້ອງ ຕໍ່ກົມປູກຝັງ ຢ່າງໜ້ອຍ ສິບຫ້າ ວັນ ກ່ອນວັນນໍາເຂົ້າຕົວຈິງ ເພື່ອພິຈາລະນາອອກໃບອະນຸຍາດ ພ້ອມທັງກໍານົດດ່ານກັກກັນພືດສາກົນ ທີ່ອະນຸຍາດໃຫ້ນໍາເຂົ້າ.

ໃນກໍລະນີ ການວິໄຈຄວາມສ່ຽງສັດຕູພືດບໍ່ສາມາດສໍາເລັດ ຕາມເວລາທີ່ກໍານົດໄວ້, ກົມປູກຝັງ ຕ້ອງແຈ້ງເປັນລາຍລັກອັກສອນ ໃຫ້ຜູ້ນໍາເຂົ້າຊາບ ກ່ຽວກັບ ຄວາມຄືບໜ້າ ແລະ ຄາດຄະເນເວລາທີ່ຈະສໍາເລັດ.

ໃນກໍລະນີ ໃບຄໍາຮ້ອງຂໍອະນຸຍາດນໍາເຂົ້າ ບໍ່ຖືກຕ້ອງຕາມຂໍ້ກໍານົດເງື່ອນໄຂດ້ານສຸຂານາໄມພືດ ຂອງ ສປປ ລາວ, ກົມປູກຝັງ ຕ້ອງປະຕິເສດການອອກໃບອະນຸຍາດນໍາເຂົ້າ ພ້ອມທັງແຈ້ງເຫດຜົນເປັນລາຍລັກອັກສອນໃຫ້ຜູ້ນໍາເຂົ້າ ພາຍໃນເວລາທີ່ກໍານົດໄວ້.

**ມາດຕາ 15 ການອອກໃບອະນຸຍາດນໍາເຂົ້າສໍາລັບ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ບໍ່ຢູ່ໃນບັນຊີທີ່ຕ້ອງຂໍອະນຸຍາດນໍາເຂົ້າ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງນໍາເຂົ້າ ພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມທີ່ບໍ່ຢູ່ໃນບັນຊີທີ່ຕ້ອງຂໍອະນຸຍາດນໍາເຂົ້າ ຕ້ອງຍື່ນຄໍາຮ້ອງ ຕໍ່ ກົມປູກຝັງ ຫຼື ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ທີ່ໄດ້ຮັບສິດມອບໝາຍຈາກກົມປູກຝັງ ຢ່າງໜ້ອຍ ສິບຫ້າວັນ ກ່ອນວັນນໍາເຂົ້າຕົວຈິງ ຕາມແບບພິມ ທີ່ກົມປູກຝັງກໍານົດ ເພື່ອພິຈາລະນາອອກໃບອະນຸຍາດ ພ້ອມທັງກໍານົດດ່ານກັກກັນພືດສາກົນ ທີ່ອະນຸຍາດໃຫ້ນໍາເຂົ້າ ຊຶ່ງໄດ້ລະບຸໄວ້ໃນໃບອະນຸຍາດນໍາເຂົ້າ. ໃນກໍລະນີ ຄໍາຮ້ອງບໍ່ຖືກຕາມເງື່ອນໄຂດ້ານສຸຂາ

ນາໄມພືດ ຂອງ ສປປ ລາວ ຕ້ອງປະຕິເສດການອອກໃບອະນຸຍາດ ພ້ອມທັງແຈ້ງເຫດຜົນເປັນລາຍລັກອັກສອນ ຕໍ່ຜູ້ສະເໜີຂໍນຳເຂົ້າ ພາຍໃນເວລາທີ່ກຳນົດໄວ້.

ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ທີ່ໄດ້ຮັບມອບສິດອອກໃບອະນຸຍາດນຳເຂົ້າ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ບໍ່ນອນຢູ່ໃນບັນຊີທີ່ຕ້ອງຂໍອະນຸຍາດນຳເຂົ້າ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

- ມີຄວາມເຂົ້າໃຈດີ ກ່ຽວກັບ ວຽກງານກັກກັນພືດ;
- ມີຄວາມຮູ້ທາງດ້ານກົດໝາຍ, ລະບຽບການສຸຂານາໄມພືດ ຂອງ ສປປ ລາວ, ຫຼັກການ ແລະ ມາດຕະຖານສາກົນ ດ້ານມາດຕະການສຸຂານາໄມພືດ;
- ສາມາດເຂົ້າເຖິງຂໍ້ມູນດ້ານສຸຂານາໄມພືດຂອງປະເທດຄູ່ຄ້າ;
- ມີການຕິດຕາມພາຍຫຼັງການນຳເຂົ້າ.

**ມາດຕາ 16 ການນຳໃຊ້ໃບອະນຸຍາດນຳເຂົ້າ**

ໃບອະນຸຍາດນຳເຂົ້າ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ນອນຢູ່ໃນບັນຊີທີ່ຕ້ອງຂໍອະນຸຍາດນຳເຂົ້າ ມີອາຍຸການນຳໃຊ້ ຕາມແຕ່ລະກໍລະນີຂຶ້ນກັບຄວາມສ່ຽງ ແລະ ປັດໄຈອື່ນ ຊຶ່ງພົວພັນກັບຂໍ້ກຳນົດເງື່ອນໄຂດ້ານສຸຂານາໄມພືດ ສຳລັບການນຳເຂົ້າ ເປັນຕົ້ນ ຈຸດປະສົງນຳເຂົ້າເພື່ອຄົ້ນຄວ້າທົດລອງ, ການຄ້າ ແລະ ການຜະລິດຕາມລະດູການ.

**ມາດຕາ 17 ການໂຈະ ຫຼື ການຍົກເລີກ ໃບອະນຸຍາດນຳເຂົ້າ**

ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ເປັນຜູ້ທົບທວນຄືນ, ດັດແກ້ ຫຼື ໂຈະ ໃບອະນຸຍາດນຳເຂົ້າ ໂດຍແຈ້ງເປັນລາຍລັກອັກສອນ ຕໍ່ຜູ້ນຳເຂົ້າຕາມກໍລະນີ ດັ່ງນີ້:

1. ມີການປ່ຽນແປງສະພາບສັດຕູພືດຂອງປະເທດສົ່ງອອກ ຫຼື ໄດ້ຮັບຂໍ້ມູນສະພາບສັດຕູພືດຊະນິດໃໝ່;
2. ກວດພົບສັດຕູພືດຊະນິດໃໝ່ໃນຊຸດສິນຄ້າໃດໜຶ່ງ ຢູ່ດ່ານນຳເຂົ້າ;
3. ຊະນິດ ຫຼື ຈຳນວນຂອງ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ນຳເຂົ້າມີການປ່ຽນແປງ;
4. ມີການປ່ຽນແປງພື້ນທີ່ປູກ ທີ່ສົ່ງອອກມາຈາກປະເທດດຽວກັນ ຫຼື ເຂດພື້ນທີ່ດຽວກັນ;
5. ມີການປ່ຽນດ່ານນຳເຂົ້າ;
6. ເກີນກຳນົດເວລາ ຕາມທີ່ໄດ້ກຳນົດໄວ້ໃນໃບອະນຸຍາດນຳເຂົ້າ;
7. ມີຂໍ້ມູນສະແດງໃຫ້ເຫັນວ່າ ການນຳເຂົ້າຊຸດສິນຄ້າດັ່ງກ່າວ ເກີດມີຄວາມສ່ຽງດ້ານສຸຂານາໄມພືດເກີນລະດັບການປ້ອງກັນທີ່ເໝາະສົມ.

ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ມີສິດ ໂຈະ ຫຼື ຍົກເລີກໃບອະນຸຍາດນຳເຂົ້າ ໃນກໍລະນີ ພົບມີການລະເມີດຂໍ້ກຳນົດເງື່ອນໄຂດ້ານສຸຂານາໄມພືດ ທີ່ບໍ່ສອດຄ່ອງຕາມກົດໝາຍ ແລະ ລະບຽບການດ້ານສຸຂານາໄມພືດ ຂອງ ສປປ ລາວ ພ້ອມທັງແຈ້ງການນຳໃຊ້ມາດຕະການສຸຂານາໄມພືດ ໃຫ້ອົງການປ້ອງກັນພືດແຫ່ງຊາດ ຂອງປະເທດສົ່ງອອກພາຍໃນ ສີ່ສິບແປດ ຊົ່ວໂມງ ແລະ ນຳໃຊ້ມາດຕະການສຸຂານາໄມພືດສຸກເສີນ ຫຼື ມາດຕະການອື່ນຊົ່ວຄາວ ຈົນກວ່າອົງການປ້ອງກັນພືດແຫ່ງຊາດ ຂອງປະເທດສົ່ງອອກ ສາມາດແກ້ໄຂໄດ້ ພ້ອມທັງຢັ້ງຢືນຫຼັກຖານ ເຖິງສາເຫດຂອງຄວາມບໍ່ສອດຄ່ອງດັ່ງກ່າວ.

# ໝວດທີ 3
# ການກວດກາກ່ອນມາເຖິງດ່ານ ແລະ ຢູ່ດ່ານກັກກັນພືດ

**ມາດຕາ 18 ການກວດກາກ່ອນມາເຖິງດ່ານ**

ກົມປູກຝັງ ເປັນຜູ້ຄົ້ນຄວ້າ ແລະ ກຳນົດດ່ານກັກກັນພືດສາກົນ ທີ່ໄດ້ມາດຕະຖານ ໃນການກວດກາການນຳເຂົ້າ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ເພື່ອສະເໜີ ກະຊວງກະສິກຳ ແລະ ປ່າໄມ້ ພິຈາລະນາ ແລະ ປະກາດໃຊ້ໃນແຕ່ລະໄລຍະ ພ້ອມທັງສົມທົບກັບອົງການປ້ອງກັນພືດແຫ່ງຊາດ ຂອງປະເທດຄູ່ຄ້າ ໃນການສ້າງຂໍ້ຕົກລົງຮັບຮູ້ສອງຝ່າຍ ກ່ຽວກັບ ການນຳໃຊ້ມາດຕະການດ້ານສຸຂານາໄມພືດ ທີ່ເທົ່າທຽມກັນ ເພື່ອຫຼີກເວັ້ນ ການກວດກາຊ້ຳຊ້ອນກັນຢູ່ດ່ານນຳເຂົ້າ ຂອງ ສປປ ລາວ.

ເຈົ້າໜ້າທີ່ກັກກັນພືດ ຂອງ ກົມປູກຝັງ, ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ແລະ ດ່ານກັກກັນພືດ ຕ້ອງຮັບປະກັນການປະຕິບັດຕາມຂັ້ນຕອນການກວດກາ ການນຳເຂົ້າ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ກ່ອນມາເຖິງດ່ານ ຕາມບົດແນະນຳ ຂອງກົມປູກຝັງ.

**ມາດຕາ 19 ການແຈ້ງເອກະສານນຳເຂົ້າ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ**

ຜູ້ນຳເຂົ້າ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ຕ້ອງແຈ້ງເອກະສານກ່ຽວຂ້ອງ ຕໍ່ດ່ານກັກກັນພືດ ຕາມແບບພິມທີ່ໄດ້ກຳນົດໄວ້ໃນບົດແນະນຳ ຂອງກົມປູກຝັງ.

ພາຍຫຼັງໄດ້ຮັບຊຸດເອກະສານນຳເຂົ້າ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ແລ້ວ ເຈົ້າໜ້າທີ່ກັກກັນພືດ ຕ້ອງຈົ່ກາຂາເຂົ້າໃສ່ໃບແຈ້ງຊຸດສິນຄ້າ ພ້ອມທັງກຳນົດເລກທີ ແລະ ວັນ ຮັບເອກະສານ, ເວລາ ແລະ ສະຖານທີ່ ກວດກາຊຸດສິນຄ້າ.

ດ່ານກັກກັນພືດ ຕ້ອງເກັບກຳຂໍ້ມູນ ແລະ ບັນທຶກຊຸດສິນຄ້ານຳເຂົ້າ ໄວ້ໃນຖານຂໍ້ມູນ ຕາມທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ໂດຍມີເລກທີອ້າງອີງ ແລະ ຂໍ້ມູນທີ່ກ່ຽວຂ້ອງ ພ້ອມທັງສຳເນົາເກັບຮັກສາໄວ້ ໃນກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຫຼື ຂະແໜງການພາສີ ໃນກໍລະນີຈຳເປັນ.

**ມາດຕາ 20 ສະພາບ ແລະ ຄວາມຖີ່ຂອງການກວດກາ**

ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຕ້ອງກວດກາການນຳເຂົ້າບົນພື້ນຖານການວິໄຈຄວາມສ່ຽງສັດຕູພືດ ຈາກປັດໄຈຕ່າງໆ ດັ່ງນີ້:

- ມາດຕະການສຸຂານາໄມພືດ ທີ່ນຳໃຊ້ໂດຍອົງການປ້ອງກັນພືດແຫ່ງຊາດ (NPPO) ຂອງປະເທດສົ່ງອອກ;
- ປະເພດສິນຄ້າ ແລະ ເປົ້າໝາຍ ຂອງການນຳໃຊ້;
- ຂະໜາດຂອງຊຸດສິນຄ້າ ແລະ ຮູບຮ່າງພາຍນອກ;
- ບໍລິມາດ, ຄວາມຖີ່ ແລະ ເວລາ ຂອງການຂົນສົ່ງ;
- ການຈັດການ ແລະ ປຸງແຕ່ງມາກ່ອນ;
- ປະສົບການ ແລະ ປະຫວັດຄວາມເປັນມາ ຂອງຜູ້ນຳເຂົ້າ;
- ຜົນຂອງການກວດກາຄັ້ງກ່ອນ;
- ວິທີການ ຂົນສົ່ງ ແລະ ຫຸ້ມຫໍ່;
- ງົບປະມານ, ຊັບພະຍາກອນ ແລະ ຄວາມສາມາດ ໃນການວິໄຈສັດຕູພືດ;
- ລັກສະນະໃນການກຳນົດວິທີການສຸ່ມເກັບຕົວຢ່າງ ຂອງການກວດກາ;
- ຄວາມຫຍຸ້ງຍາກໃນການກວດກາຫາສັດຕູພືດໃນຊຸດສິນຄ້າສະເພາະໃດໜຶ່ງ;

- ສະພາບຄວາມເນົ່າເປື່ອຍຂອງສິນຄ້າ;
- ປະສິດທິພາບໃນການກວດກາ ເພື່ອປະເມີນຄວາມສ່ຽງຂອງຊຸດສິນຄ້າ.

ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຕ້ອງສ້າງລະບົບການບັນທຶກຂໍ້ມູນ ກ່ຽວກັບ ຜູ້ນຳເຂົ້າ, ສິນຄ້າ ແລະ ປະເທດຕົ້ນກຳເນີດສິນຄ້າ.

ໃນການຂົນສົ່ງສິນຄ້າແຕ່ລະຄັ້ງ ຕ້ອງຜ່ານການກວດກາ ແລະ ສຸ່ມເກັບຕົວຢ່າງຕາມ ບົດແນະນຳຂອງກົມປູກຝັງ ທີ່ໄດ້ກຳນົດ.

**ມາດຕາ 21 ການກວດກາຊຸດສິນຄ້າຢູ່ດ່ານກັກກັນພືດ**

ເມື່ອຊຸດສິນຄ້າ ມາເຖິງດ່ານນຳເຂົ້າທີ່ກຳນົດໄວ້, ເຈົ້າໜ້າທີ່ກັກກັນພືດ ຕ້ອງດຳເນີນການກວດກາຊຸດສິນຄ້າທັນທີ ໂດຍສະເພາະສິນຄ້າທີ່ເນົ່າເປື່ອຍງ່າຍ ຕ້ອງດຳເນີນການກວດກາກ່ອນຊຸດສິນຄ້າປະເພດອື່ນ ແລະ ດຳເນີນການກວດກາເອກະສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂອງຂໍ້ຕົກລົງສະບັບນີ້.

ພາຍຫຼັງເຈົ້າໜ້າທີ່ກັກກັນພືດ ກວດກາ ແລະ ຢັ້ງຢືນວ່າ ຊຸດສິນຄ້າມີເອກະສານນຳສົ່ງມາຄົບຖ້ວນ ແລະ ປະຕິບັດຖືກຕ້ອງຕາມເງື່ອນໄຂດ້ານສຸຂານາໄມພືດ ຂອງ ສປປ ລາວ ແລ້ວ ເຈົ້າໜ້າທີ່ກັກກັນພືດ ຕ້ອງຢັ້ງຢືນ ແລະ ປ່ອຍສິນຄ້າທັນທີ ຕາມລະບຽບການ. ໃນກໍລະນີ ພົບວ່າຊຸດສິນຄ້າ ບໍ່ມີຄວາມສ່ຽງດ້ານສຸຂານາໄມພືດ, ແຕ່ມີຂໍ້ມູນບໍ່ສອດຄ່ອງກັບໃບອະນຸຍາດນຳເຂົ້າ ແລະ ຊຸດສິນຄ້າ ນັ້ນ ເຈົ້າໜ້າທີ່ກັກກັນພືດ ຕ້ອງກັກຊຸດສິນຄ້າດັ່ງກ່າວໄວ້ ຈົນກວ່າຈະໄດ້ຮັບໃບອະນຸຍາດນຳເຂົ້າສະບັບໃໝ່ທີ່ມີຄວາມສອດຄ່ອງກັບຊຸດສິນຄ້າ.

ເຈົ້າໜ້າທີ່ກັກກັນພືດ ຕ້ອງລາຍງານຜົນຂອງການກວດກາ ແລະ ຢັ້ງຢືນ ໃຫ້ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຮັບຊາບ ພ້ອມທັງ ສຳເນົາເກັບຮັກສາໄວ້ຢູ່ດ່ານ ໜຶ່ງສະບັບ.

**ມາດຕາ 22 ການກວດກາເອກະສານ**

ເຈົ້າໜ້າທີ່ກັກກັນພືດ ຕ້ອງກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນຂອງເອກະສານ ດັ່ງນີ້:

- ໃບອະນຸຍາດນຳເຂົ້າ ອອກໃຫ້ໂດຍກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ;
- ໃບຢັ້ງຢືນສຸຂານາໄມພືດ ຫຼື ໃບຢັ້ງຢືນສຸຂານາໄມພືດ ສຳລັບ ສົ່ງອອກຕໍ່ ຂອງປະເທດສົ່ງອອກ;
- ໃບແຈ້ງລາຍການສິນຄ້າ ແລະ ໃບແຈ້ງລາຄາ;
- ໃບຢັ້ງຢືນການບຳບັດສິນຄ້າ;
- ໃບຢັ້ງຢືນ ຫຼື ບົດລາຍງານ ກ່ຽວກັບ ຜົນການກວດກາພາກສະໜາມ;
- ບົດບັນທຶກຂໍ້ມູນສະຖານທີ່ປະກອບການຜະລິດ;
- ເອກະສານຢັ້ງຢືນແຫຼ່ງກຳເນີດ;
- ໃບຢັ້ງຢືນ CITES ໃນກໍລະນີນຳເຂົ້າວັດຖຸຕ້ອງຄວບຄຸມທີ່ຢູ່ໃນບັນຊີ ສົນທິສັນຍາສາກົນ ວ່າດ້ວຍ ການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າທີ່ໃກ້ຈະສູນພັນ ລະຫວ່າງຊາດ;
- ເອກະສານອື່ນທີ່ກ່ຽວຂ້ອງ ຕາມການກຳນົດຂອງກົມປູກຝັງ ໃນແຕ່ລະໄລຍະ.

ໃນການກວດກາໃບຢັ້ງຢືນສຸຂານາໄມພືດນັ້ນ, ເຈົ້າໜ້າທີ່ກັກກັນພືດ ຕ້ອງກວດກາຄວາມຖືກຕ້ອງຂອງໃບຢັ້ງຢືນສຸຂານາໄມພືດ ຊຶ່ງປະກອບມີ ດັ່ງນີ້:

1. ໃບຢັ້ງຢືນສຸຂານາໄມພືດ ຖືກຕ້ອງຕາມແບບພິມທີ່ຖືກຮັບຮອງຈາກ ມາດຕະຖານສາກົນດ້ານມາດຕະການສຸຂານາໄມພືດ;
2. ອາຍຸໃບຢັ້ງຢືນສຸຂານາໄມພືດ ຕ້ອງບໍ່ເກີນ ສິບສີ່ ວັນ ນັບແຕ່ວັນອອກໃບຢັ້ງຢືນສຸຂານາໄມພືດ ແລະ ຂົນສົ່ງຊຸດສິນຄ້າ ອອກຈາກປະເທດສົ່ງອອກ;

3. ເປັນພາສາອັງກິດ;
4. ປະກອບຂໍ້ມູນຄົບຖ້ວນ, ຊື່ວິທະຍາສາດ ແລະ ຊື່ສາມັນ ຂອງຊຸດສິນຄ້າ;
5. ວັນທີ, ເດືອນ, ປີ ອອກໃບຢັ້ງຢືນສຸຂານາໄມພືດ;
6. ອອກໃຫ້ໂດຍ ແລະ ໃຊ້ຕາປະທັບ ຂອງອົງການປ້ອງກັນພືດແຫ່ງຊາດ (NPPO) ຂອງປະເທດສົ່ງອອກ;
7. ມີການແຈ້ງຂໍ້ມູນເພີ່ມຕື່ມ (additional declarations) ຕາມທີ່ໄດ້ກຳນົດໄວ້ໃນໃບອະນຸຍາດນຳເຂົ້າ.

ໃນກໍລະນີ ກວດກາພົບວ່າ ໃບຢັ້ງຢືນສຸຂານາໄມພືດ ບໍ່ຖືກຕ້ອງຕາມລະບຽບກົດໝາຍ ເປັນຕົ້ນ ຂໍ້ມູນບໍ່ຄົບຖ້ວນ, ໃບຢັ້ງຢືນສຸຂານາໄມພືດໝົດອາຍຸການນຳໃຊ້, ມີການດັດແປງ, ລຶບຂໍ້ມູນໂດຍບໍ່ໄດ້ຮັບອະນຸຍາດ ຫຼື ຂໍ້ມູນບໍ່ຖືກຕ້ອງກັບຊຸດສິນຄ້າຕົວຈິງ, ໃບຢັ້ງຢືນສຸຂານາໄມພືດອອກໃຫ້ແກ່ຜະລິດຕະພັນຕ້ອງຫ້າມ, ໃບຢັ້ງຢືນສຸຂານາໄມພືດທີ່ຖືກປອມແປງ, ໃບຢັ້ງຢືນສຸຂານາໄມພືດບໍ່ກົງກັບໃບສຳເນົາຂອງໃບຢັ້ງຢືນສຸຂານາໄມພືດທີ່ໄດ້ອອກໃຫ້, ເຈົ້າໜ້າທີ່ກັກກັນພືດ ຕ້ອງປະຕິເສດການອະນຸຍາດ ຫຼື ໃຫ້ມີການແຈ້ງຂໍ້ມູນເພີ່ມຕື່ມ ພ້ອມທັງແຈ້ງເປັນລາຍລັກອັກສອນ ໃຫ້ຜູ້ນຳເຂົ້າຮັບຊາບ.

ໃບຢັ້ງຢືນສຸຂານາໄມພືດ ທີ່ຖືກປອມແປງມີລັກສະນະ ດັ່ງນີ້:

- ອອກໃຫ້ໂດຍນຳໃຊ້ແບບຟອມ ຫຼື ສິ່ງພິມ ທີ່ບໍ່ໄດ້ຮັບອະນຸຍາດຈາກອົງການປ້ອງກັນພືດແຫ່ງຊາດ (NPPO) ຂອງປະເທດສົ່ງອອກ;
- ອອກໃຫ້ໂດຍບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ບໍ່ໄດ້ຮັບອະນຸຍາດຈາກອົງການປ້ອງກັນພືດແຫ່ງຊາດ (NPPO) ຂອງປະເທດສົ່ງອອກ;
- ມີຂໍ້ມູນບໍ່ຖືກຕ້ອງ ຫຼື ບໍ່ຖືກກັບຄວາມເປັນຈິງ;
- ມີການປອມແປງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ຖ້າພົບມີຂໍ້ໃດໜຶ່ງ ຫຼື ທຸກຂໍ້ທີ່ກ່າວມາຂ້າງເທິງນັ້ນ ແມ່ນສາມາດປະຕິເສດການອອກໃບຢັ້ງຢືນສຸຂານາໄມພືດ ພ້ອມທັງແຈ້ງໃຫ້ກົມປູກຝັງ ເພື່ອແຈ້ງຕໍ່ໄປຍັງອົງການປ້ອງກັນພືດແຫ່ງຊາດ (NPPO) ຂອງປະເທດສົ່ງອອກ ແລະ ຜູ້ນຳເຂົ້າຮັບຊາບ ກ່ອນນຳໃຊ້ມາດຕະການສຸຂານາໄມພືດໃນຂັ້ນຕໍ່ໄປ.

**ມາດຕາ 23 ການສຸ່ມເກັບຕົວຢ່າງ ແລະ ການວິໄຈ**

ໃນເວລາດຳເນີນການກວດກາ ຫາກມີເຫດຜົນຢັ້ງຢືນວ່າ ຊຸດສິນຄ້າບໍ່ຖືກຕ້ອງຕາມເງື່ອນໄຂດ້ານສຸຂານາໄມພືດ ຂອງ ສປປ ລາວ ຫຼື ສົງໄສວ່າ ຊຸດສິນຄ້າມີການຕິດແປດສັດຕູພືດຄວບຄຸມ ນັ້ນ, ເຈົ້າໜ້າທີ່ກັກກັນພືດ ຕ້ອງສຸ່ມເກັບຕົວຢ່າງ, ປະກອບຂໍ້ມູນ ແລະ ສົ່ງຕົວຢ່າງໄປຫ້ອງທົດລອງ ເພື່ອວິໄຈ ຫຼື ໃນກໍລະນີຈຳເປັນຕ້ອງກັກສິນຄ້າໄວ້ ຈົນກວ່າສາມາດສະຫຼຸບໄດ້ວ່າ ມີ ຫຼື ບໍ່ມີສັດຕູພືດຄວບຄຸມ.

ເຈົ້າໜ້າທີ່ກັກກັນພືດ ຕ້ອງເກັບຕົວຢ່າງໃຫ້ໄວ, ຖືກຕ້ອງ, ຄົບຖ້ວນ ແລະ ສາມາດກວດສອບຫາສາເຫດຍ້ອນຫຼັງໄດ້ ພ້ອມທັງລາຍງານຜົນຂອງການວິໄຈຕົວຢ່າງ ໃຫ້ກົມປູກຝັງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ແລະ ຜູ້ນຳເຂົ້າ.

ສຳລັບ ຫຼັກການ, ວິທີການ ແລະ ຂັ້ນຕອນການສຸ່ມເກັບຕົວຢ່າງ ໃຫ້ປະຕິບັດຕາມວິທີການສຸ່ມ ແລະ ການທົດສອບ ທີ່ກຳນົດໄວ້ໃນຄູ່ມືການກວດກາ ຂອງກົມປູກຝັງ.

**ມາດຕາ 24 ມາດຕະການສຸຂານາໄມພືດ ທີ່ນຳໃຊ້ໃນການກວດກາຊຸດສິນຄ້າຢູ່ດ່ານກັກກັນພືດ**

ໃນເວລາກວດກາຊຸດສິນຄ້າຢູ່ດ່ານກັກກັນພືດ, ຫາກພົບມີຄວາມສ່ຽງສັດຕູພືດ, ພົບເຫັນສັດຕູພືດຄວບຄຸມໃນຊຸດສິນຄ້າ ຫຼື ກວດພົບສັດຕູພືດທີ່ບໍ່ກັກກັນແຕ່ຕ້ອງຄວບຄຸມ ໃຫ້ນຳໃຊ້ມາດຕະການສຸຂານາໄມພືດ ຕາມແຕ່ລະກໍລະນີ ດັ່ງນີ້:

1. **ມີຄວາມສ່ຽງສັດຕູພືດ:** ເຈົ້າໜ້າທີ່ກັກກັນພືດ ຕ້ອງເກັບຕົວຢ່າງ ສົ່ງໄປທົດສອບ ຫຼື ໃນກໍລະນີທີ່ຈຳເປັນ ແມ່ນໃຫ້ກັກຊຸດສິນຄ້າໄວ້ ຈົນກວ່າສາມາດສະຫຼຸບໄດ້ວ່າ ມີການຕິດແປດ ຫຼື ບໍ່ຕິດແປດສັດຕູພືດຄວບຄຸມ ແລະ ແຈ້ງໃຫ້ຜູ້ນຳເຂົ້າຊາບ ແລ້ວລາຍງານຜົນການກວດກາ ໃຫ້ກົມປູກຝັງ, ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ແລະ ຜູ້ນຳເຂົ້າ ຊາບພາຍໃນ ຊາວສີ່ຊົ່ວໂມງ;
2. **ກວດພົບສັດຕູພືດຄວບຄຸມໃນຊຸດສິນຄ້າ:** ດ່ານກັກກັນພືດ ຕ້ອງນຳໃຊ້ມາດຕະການໃດໜຶ່ງທີ່ເໝາະສົມ ເປັນຕົ້ນ ກັກຊຸດສິນຄ້າ ໂດຍປະສານສົມທົບກັບເຈົ້າໜ້າທີ່ພາສີ ດຳເນີນການບຳບັດຊຸດສິນຄ້າ ຖ້າມີຄວາມເປັນໄປໄດ້ໃນການກຳຈັດສັດຕູພືດ, ໃຫ້ຜູ້ນຳເຂົ້າ ສົ່ງຊຸດສິນຄ້າກັບຄືນປະເທດສົ່ງອອກ ຫຼື ໃນກໍລະນີ ປະເທດສົ່ງອອກຫາກປະຕິເສດການສົ່ງກັບ ແລະ ສປປ ລາວ ກໍບໍ່ມີມາດຕະການສຸຂານາໄມພືດ ຫຼື ທາງເລືອກທີ່ສາມາດນຳໃຊ້ເພື່ອຫຼຸດຜ່ອນຄວາມສ່ຽງ ແມ່ນໃຫ້ກົມປູກຝັງ ດຳເນີນການຍຶດ ແລະ ທຳລາຍຖິ້ມຊຸດສິນຄ້າດັ່ງກ່າວ. ສຳລັບ ຄ່າໃຊ້ຈ່າຍໃນການນຳໃຊ້ມາດຕະການສຸຂານາໄມພືດ ແມ່ນຄວາມຮັບຜິດຊອບຂອງຜູ້ນຳເຂົ້າ;
3. **ກວດພົບສັດຕູພືດທີ່ບໍ່ກັກກັນແຕ່ຕ້ອງຄວບຄຸມ:** ເຈົ້າໜ້າທີ່ກັກກັນພືດ ຕ້ອງກັກຊຸດສິນຄ້າຈົນກວ່າສາມາດສະຫຼຸບໄດ້ວ່າ ສັດຕູພືດທີ່ບໍ່ກັກກັນແຕ່ຕ້ອງຄວບຄຸມ ຢູ່ໃນລະດັບທີ່ຍອມຮັບໄດ້, ຖ້າເຫັນວ່າມີການຕິດແປດເກີນລະດັບຍອມຮັບໄດ້ ດ່ານກັກກັນພືດ ຕ້ອງນຳໃຊ້ມາດຕະການສຸຂານາໄມພືດ ທີ່ສອດຄ່ອງກັບເງື່ອນໄຂພາຍໃນປະເທດ ແລະ ໃຊ້ສະເພາະເພື່ອຢັບຢັ້ງໃຫ້ຢູ່ໃນລະດັບທີ່ຍອມຮັບໄດ້ ຫຼື ອາດຈະບຳບັດຊຸດສິນຄ້າ, ແຍກຊຸດສິນຄ້າທີ່ຕິດແປດສັດຕູພືດນັ້ນອອກ ເພື່ອໃຫ້ຊຸດສິນຄ້າທີ່ບໍ່ຕິດແປດສັດຕູພືດ ສາມາດອະນຸຍາດນຳເຂົ້າໄດ້ ໂດຍປະຕິບັດຄວາມເທົ່າທຽມກັບມາດຕະການສຸຂານາໄມພືດ ທີ່ປະຕິບັດຢູ່ພາຍໃນປະເທດ. ໃນກໍລະນີ ບໍ່ມີມາດຕະການສຸຂານາໄມພືດ ທີ່ເຮັດໃຫ້ລະດັບສັດຕູພືດທີ່ບໍ່ກັກກັນແຕ່ຕ້ອງຄວບຄຸມຫຼຸດລົງເຖິງລະດັບຍອມຮັບໄດ້, ກົມປູກຝັງ ຕ້ອງສົ່ງຊຸດສິນຄ້າກັບຄືນປະເທດສົ່ງອອກ ແລະ ຖ້າປະເທດສົ່ງອອກປະຕິເສດການສົ່ງກັບ ຕ້ອງດຳເນີນການຍຶດ ແລະ ທຳລາຍຖິ້ມຊຸດສິນຄ້າດັ່ງກ່າວ.

ເຈົ້າໜ້າທີ່ກັກກັນພືດ ສາມາດປະຕິເສດການນຳໃຊ້ມາດຕະການສຸຂານາໄມພືດ ຕໍ່ກັບສັດຕູພືດທີ່ບໍ່ກັກກັນແຕ່ຕ້ອງຄວບຄຸມ ໃນກໍລະນີ ບໍ່ມີຄວາມສ່ຽງສັດຕູພືດເກີດຂຶ້ນ ຫຼື ແຜ່ກະຈາຍ ໂດຍມີການຢັ້ງຢືນທາງດ້ານວິຊາການ.

ເຈົ້າໜ້າທີ່ກັກກັນພືດ ຕ້ອງລາຍງານຜົນການກວດກາ, ການວິໄຈ ແລະ ການນຳໃຊ້ມາດຕະການສຸຂານາໄມພືດ ໃຫ້ກົມປູກຝັງ, ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ແລະ ຜູ້ນຳເຂົ້າ.

**ມາດຕາ 25 ການປະຕິບັດດ້ານສຸຂານາໄມພືດ ຕໍ່ຊຸດສິນຄ້ານຳເຂົ້າທີ່ບໍ່ຖືກຕ້ອງ ແລະ ແບບສຸກເສີນ**

ເມື່ອກວດກວດພົບຊຸດສິນຄ້ານຳເຂົ້າທີ່ບໍ່ຖືກຕ້ອງ ເປັນຕົ້ນ ຊຸດສິນຄ້າທີ່ມີຫຼັກຖານສະແດງເຖິງຄວາມລົ້ມເຫຼວໃນການປະຕິບັດດ້ານສຸຂານາໄມພືດ ຕາມທີ່ໄດ້ສັນຍາສອງຝ່າຍ, ລະບຽບການ ແລະ ເງື່ອນໄຂດ້ານສຸຂານາໄມພືດສຳລັບການນຳເຂົ້າ, ໃບຢັ້ງຢືນສຸຂານາໄມພືດບໍ່ຖືກຕ້ອງ ແລະ ວັດຖຸຕ້ອງຄວບຄຸມທີ່ນຳເຂົ້າເປັນສິ່ງຕ້ອງຫ້າມ, ເຈົ້າໜ້າທີ່ກັກກັນພືດ ຕ້ອງປະຕິບັດດ້ານສຸຂານາໄມພືດ ຕາມສະພາບຂອງຊຸດສິນຄ້າ ແລະ ຄວາມ

ສ່ຽງຂອງສັດຕູພືດ. ສຳລັບ ຂັ້ນຕອນ ແລະ ວິທີການ ການປະຕິບັດດ້ານສຸຂານາໄມພືດ ສຳລັບຊຸດສິນຄ້ານຳເຂົ້າ ທີ່ບໍ່ຖືກຕ້ອງ ໄດ້ກຳນົດໄວ້ໃນບົດແນະນຳ ຂອງກົມປູກຝັງ.

ດ່ານກັກກັນພືດ ຕ້ອງປະຕິບັດດ້ານສຸຂານາໄມພືດແບບສຸກເສີນທັນທີ ຖ້າພົບວ່າ ຊຸດສິນຄ້າບໍ່ທັນໄດ້ກຳນົດມາດຕະການສຸຂານາໄມພືດ, ມີການປົນເປື້ອນຂອງພາຫະນະຂົນສົ່ງ ແລະ ສາງເກັບມ້ຽນ ຫຼື ສະຖານທີ່ອື່ນ ທີ່ພົວພັນກັບຊຸດສິນຄ້າທີ່ນຳເຂົ້າ, ພົບສັດຕູພືດຊະນິດໃໝ່ໃນຊຸດສິນຄ້າທີ່ບໍ່ໄດ້ຜ່ານການປະເມີນຄວາມສ່ຽງມາກ່ອນ ແລະ ມີສັດຕູພືດຕິດແປດມານຳພາຫະອື່ນ ພ້ອມທັງ ລາຍງານໃຫ້ກົມປູກຝັງ ເພື່ອແຈ້ງຜົນການປະຕິບັດດ້ານສຸຂານາໄມພືດແບບສຸກເສີນ ຕໍ່ອົງການປ້ອງກັນພືດແຫ່ງຊາດ (NPPO) ຂອງປະເທດສົ່ງອອກ. ສຳລັບຂັ້ນຕອນ ແລະ ວິທີການປະຕິບັດມາດຕະການສຸຂານາໄມພືດແບບສຸກເສີນ ຕ້ອງປະຕິບັດຕາມບົດແນະນຳ ຂອງກົມປູກຝັງ.

ໃນກໍລະນີ ກວດພົບສັດຕູພືດທີ່ບໍ່ສາມາດຈຳແນກຊະນິດສັດຕູພືດໄດ້, ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ສາມາດປະຕິບັດມາດຕະການສຸຂານາໄມພືດຊົ່ວຄາວ ແລະ ເກັບຕົວຢ່າງເພີ່ມ ພ້ອມທັງສົມທົບກັບອົງການປ້ອງກັນພືດແຫ່ງຊາດ (NPPO) ຂອງປະເທດສົ່ງອອກ ເພື່ອຊ່ວຍໃນການຈຳແນກສັດຕູພືດດັ່ງກ່າວ. ພາຍຫຼັງວິໄຈຄວາມສ່ຽງສັດຕູພືດ ຫາກຢັ້ງຢືນວ່າ ສັດຕູພືດມີຄວາມຈຳເປັນຕ້ອງປະຕິບັດດ້ານສຸຂານາໄມພືດ, ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຕ້ອງເພີ່ມສັດຕູພືດດັ່ງກ່າວ ເຂົ້າໃນບັນຊີສັດຕູພືດຄວບຄຸມ ໃນ ສປປ ລາວ.

**ມາດຕາ 26 ການປ່ອຍຊຸດສິນຄ້າຢ່າງເປັນທາງການ**

ພາຍຫຼັງການກວດກາຊຸດສິນຄ້ານຳເຂົ້າດັ່ງກ່າວ ແລ້ວ, ເຈົ້າໜ້າທີ່ກັກກັນພືດ ຕ້ອງຈ້ຳກາປະທັບຕາຜ່ານໃສ່ໃບແຈ້ງຜ່ານ, ເພື່ອປ່ອຍຊຸດສິນຄ້າຢ່າງເປັນທາງການ ດ້ວຍຕາປະທັບ ຕາມທີ່ໄດ້ກຳນົດໄວ້ໃນບົດແນະນຳຂອງກົມປູກຝັງ.

**ມາດຕາ 27 ການປ່ອຍຊຸດສິນຄ້າແບບມີເງື່ອນໄຂ**

ການປ່ອຍຊຸດສິນຄ້າແບບມີເງື່ອນໄຂ ແມ່ນການກຳນົດໃຫ້ມີການກວດກາພາຍຫຼັງການນຳເຂົ້າຊຸດສິນຄ້າ ຢູ່ສະຖານທີ່ໃດໜຶ່ງ ໂດຍເຈົ້າໜ້າທີ່ກັກກັນພືດ ໃນກໍລະນີເຫັນວ່າ ມີການເຄື່ອນຍ້າຍຊຸດສິນຄ້າເຂົ້າມາໃນສະຖານທີ່ກວດກາ ຕາມໄລຍະເວລາທີ່ກຳນົດໃຫ້ໂດຍກົມປູກຝັງ ຫຼື ຕ້ອງໄດ້ປະຕິບັດຕາມເງື່ອນໄຂດ້ານສຸຂານາໄມພືດ ທີ່ກຳນົດໄວ້ໃນໃບອະນຸຍາດນຳເຂົ້າ ຫຼື ຂໍ້ຕົກລົງ ກ່ຽວກັບ ການກັກ, ແຍກປ່ຽວ ແລະ ກັກກັນ, ລວມທັງໄລຍະເວລາທີ່ວັດຖຸຕ້ອງຄວບຄຸມ ຕ້ອງຖືກກັກໄວ້ເພື່ອຕິດຕາມ.

ໃນກໍລະນີ ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ກຳນົດໃຫ້ມີການກວດກາພາຍຫຼັງການນຳເຂົ້າ ຢູ່ສະຖານທີ່ໃດໜຶ່ງ ນອກດ່ານກັກກັນພືດ, ເຈົ້າໜ້າທີ່ກັກກັນ ພືດຕ້ອງປ່ອຍຊຸດສິນຄ້າແບບມີເງື່ອນໄຂ ເພື່ອແຈ້ງຕໍ່ເຈົ້າໜ້າທີ່ພາສີໃນຂັ້ນຕໍ່ໄປ ພ້ອມທັງລາຍງານ ຕໍ່ ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ກ່ຽວກັບ ສະຖານທີ່, ຈຳນວນ ແລະ ລາຍລະອຽດຂອງຊຸດສິນຄ້າດັ່ງກ່າວ. ການກວດກາພາຍຫຼັງການນຳເຂົ້າ ແມ່ນບໍ່ໃຫ້ເກີນ ສາມ ວັນລັດຖະການ ນັບແຕ່ວັນປ່ອຍຊຸດສິນຄ້າແບບມີເງື່ອນໄຂ ເປັນຕົ້ນໄປ.

**ມາດຕາ 28 ການແຈ້ງຂໍ້ມູນສັດຕູພືດຄວບຄຸມໃຫ້ອົງການປ້ອງກັນພືດສາກົນ (IPPC)**

ກົມປູກຝັງ ຕ້ອງແຈ້ງຂໍ້ມູນສັດຕູພືດຄວບຄຸມໃຫ້ຜູ້ນຳເຂົ້າ, ອົງການປ້ອງກັນພືດແຫ່ງຊາດຂອງປະເທດສົ່ງອອກ (NPPO) ແລະ ກອງເລຂາ ຂອງອົງການປ້ອງກັນພືດພາກພື້ນ (IPPC) ແລະ ສາກົນ (APPPO) ເປັນແຕ່ລະໄລຍະ ໂດຍສະເພາະຂໍ້ມູນ ກ່ຽວກັບ ສັດຕູພືດຄວບຄຸມ, ການກວດກາ ແລະ ມາດຕະການສຸຂານາ

ໄມພືດແບບສຸກເສີນທີ່ນຳໃຊ້, ຜົນການທົດສອບ, ເອກະສານຢັ້ງຢືນການບຳບັດ, ໃບຢັ້ງຢືນການຍຶດ ແລະ ທຳລາຍຖິ້ມຊຸດສິນຄ້າ ແລະ ເອກະສານອື່ນທີ່ກ່ຽວຂ້ອງ.

**ມາດຕາ 29 ການທົບທວນຄືນມາດຕະການສຸຂານາໄມພືດ**

ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຕ້ອງທົບທວນຄືນການຈັດຕັ້ງປະຕິບັດບັນດາມາດຕະການດ້ານສຸຂານາໄມພືດ ໃນແຕ່ລະໄລຍະ. ຫາກມີການລະເມີດ ຫຼື ບໍ່ປະຕິບັດຕາມເງື່ອນໄຂການນຳເຂົ້າ ໃຫ້ດຳເນີນການປະຕິບັດ ມາດຕະການສຸຂານາໄມພືດແບບສຸກເສີນ ຫຼື ສາມາດດັດແກ້ມາດຕະການດັ່ງກ່າວ ໃຫ້ສອດຄ່ອງກັບເງື່ອນໄຂສຸຂານາໄມພືດສຳລັບການນຳເຂົ້າ.

## ໝວດທີ 4
## ການກວດກາພາຍຫຼັງການນຳເຂົ້າ

**ມາດຕາ 30 ສະຖານທີ່ກັກກັນພາຍຫຼັງການນຳເຂົ້າ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ສ້າງຕັ້ງສະຖານທີ່ກັກກັນພາຍຫຼັງການນຳເຂົ້າ ຕ້ອງໄດ້ຮັບອະນຸຍາດ ຈາກກົມປູກຝັງ ແລະ ປະຕິບັດຕາມເງື່ອນໄຂດ້ານສຸຂານາໄມພືດ ທີ່ໄດ້ກຳນົດໄວ້ໃນບົດແນະນຳຂອງກົມປູກຝັງ.

ພາຍຫຼັງໄດ້ຮັບໃບຄຳຮ້ອງ, ກົມປູກຝັງ ຕ້ອງກວດກາສະຖານທີ່ກັກກັນ ແລະ ຖ້າຫາກຖືກຕ້ອງຕາມຂໍ້ກຳນົດເງື່ອນໄຂດ້ານສຸຂານາໄມພືດ ແລ້ວ ຕ້ອງອອກໃບອະນຸຍາດທາງດ້ານວິຊາການ ພ້ອມທັງກຳນົດໄລຍະເວລາ ຫຼື ຄວາມຖີ່ຂອງການກວດກາໃນໃບອະນຸຍາດດັ່ງກ່າວ.

**ມາດຕາ 31 ການກວດກາພາຍຫຼັງການນຳເຂົ້າຢູ່ພາກສະໜາມ**

ການກວດກາພາຍຫຼັງການນຳເຂົ້າຢູ່ພາກສະໜາມ, ໃຫ້ເຈົ້າໜ້າທີ່ກັກກັນພືດ ປະຕິບັດ ດັ່ງນີ້:

1. ພາຍຫຼັງການນຳເຂົ້າ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ເຈົ້າໜ້າທີ່ກັກກັນພືດຕ້ອງກວດກຊຸດສິນຄ້າ ຢູ່ສະຖານທີ່ກວດກາ ແລະ ສະຖານທີ່ກັກກັນພາຍຫຼັງການນຳເຂົ້າ ທີ່ກຳນົດໄວ້;
2. ອອກໃບອະນຸຍາດໃຫ້ແກ່ວັດຖຸຕ້ອງຄວບຄຸມ ຈາກການກັກກັນພືດພາຍຫຼັງການນຳເຂົ້າ ໃນກໍລະນີ ທີ່ວັດຖຸຕ້ອງຄວບຄຸມ ມີສັດຕູພືດ ແລະ ບໍ່ຕິດແປດ ຈາກສັດຕູພືດພາຍໃນໄລຍະເວລາຕິດຕາມທີ່ກຳນົດໄວ້;
3. ໃນກໍລະນີ ຊຸດສິນຄ້າຕິດແປດສັດຕູພືດຄວບຄຸມ, ມີສັດຕູພືດ ຫຼື ຕິດແປດຈາກສັດຕູພືດຈາກຕ່າງປະເທດ ເຈົ້າໜ້າທີ່ກັກກັນພືດ ຕ້ອງອອກຄຳສັ່ງໃຫ້ທຳລາຍຊຸດສິນຄ້າທັງໝົດ ຫຼື ບາງສ່ວນ ພ້ອມທັງແນະນຳໃຫ້ຜູ້ນຳເຂົ້າ ປະຕິບັດມາດຕະການສຸຂານາໄມພືດ ເປັນຕົ້ນ ການບຳບັດຊຸດສິນຄ້າດ້ວຍວິທີການຕ່າງໆ ຕາມຫຼັກວິຊາການ.

ເມື່ອຊຸດສິນຄ້າໄດ້ຜ່ານການກວດກາ ຢູ່ສະຖານທີ່ເກັບມ້ຽນ, ສະຖານທີ່ກັກກັນພາຍຫຼັງການນຳເຂົ້າ ແລ້ວ ຕ້ອງມີບົດລາຍງານ ແລະ ລົງລາຍເຊັນ ຈາກພະນັກງານ ແລະ ເຈົ້າໜ້າທີ່ກັກກັນພືດ ທີ່ໄດ້ລົງກວດກາ ແລະ ເຊັນຢັ້ງຢືນຜູ້ນຳເຂົ້າ ຫຼື ຜູ້ທີ່ຖືກມອບສິດຈາກຜູ້ນຳເຂົ້າ.

## ໝວດທີ 5
## ການສົ່ງຜ່ານ

**ມາດຕາ 32 ການສະເໜີຂໍອະນຸຍາດດ້ານສຸຂານາໄມພືດໃນການສົ່ງຜ່ານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງໃນການສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸ ຕ້ອງຄວບຄຸມ ຜ່ານດິນແດນ ຂອງ ສປປ ລາວ ຕ້ອງໄດ້ຮັບອະນຸຍາດຈາກ ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ໂດຍຍື່ນຄຳຮ້ອງ ຕາມແບບພິມ ທີ່ກົມປູກຝັງກຳນົດ ຢ່າງໜ້ອຍ ສິບຫ້າ ວັນ ກ່ອນວັນທີ່ຕ້ອງການສົ່ງຜ່ານຊຸດສິນຄ້າ.

**ມາດຕາ 33 ການອອກອະນຸຍາດດ້ານສຸຂານາໄມພືດໃຫ້ສົ່ງຜ່ານ**

ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຕ້ອງອະນຸຍາດສົ່ງຜ່ານທາງດ້ານສຸຂານາໄມພືດ ຕາມແບບພິມທີ່ກຳນົດໃນບົດແນະນຳຂອງກົມປູກຝັງ ບົນພື້ນຖານການວິໄຈຄວາມສ່ຽງສັດຕູພືດ ຕໍ່ກັບຊຸດສິນຄ້າທີ່ເຫັນວ່າບໍ່ມີຄວາມສ່ຽງຕໍ່ສຸຂະພາບພືດ.

ໃບອະນຸຍາດສົ່ງຜ່ານດ້ານສຸຂານາໄມພືດ ມີອາຍຸການນຳໃຊ້ ເຈັດ ວັນ ແລະ ສາມາດຕໍ່ໄດ້ ແຕ່ບໍ່ໃຫ້ກາຍ ຊາວເອັດ ວັນ ໂດຍຂຶ້ນກັບການສະເໜີຂອງຜູ້ດຳເນີນການສົ່ງຜ່ານ ຊຶ່ງກຳນົດໂດຍກົມປູກຝັງ.

ໃນກໍລະນີ ທີ່ຊຸດສິນຄ້າມີຄວາມສ່ຽງຕໍ່ສຸຂະພາບພືດ, ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຕ້ອງກຳນົດມາດຕະການສຸຂານາໄມພືດ ເພື່ອຮັບປະກັນຄວາມປອດໄພ ແລະ ຄວາມຖືກຕ້ອງດ້ານສຸຂານາໄມພືດ ສຳລັບຊຸດສິນຄ້າໃນໄລຍະສົ່ງຜ່ານ ສປປ ລາວ ດັ່ງນີ້:

1. ກຳນົດຮູບແບບຂອງການຂົນສົ່ງ ແລະ ເສັ້ນທາງການຂົນສົ່ງສະເພາະ;
2. ຄວບຄຸມການປ່ຽນແປງຊຸດສິນຄ້າ;
3. ນຳໃຊ້ອຸປະກອນ ຫຼື ສິ່ງອຳນວຍຄວາມສະດວກ ທີ່ກຳນົດໃຫ້ໂດຍກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ;
4. ສາງເກັບມ້ຽນຂອງພາສີຕ້ອງ ຖືກຮັບຮອງໂດຍກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ;
5. ດຳເນີນການບຳບັດດ້ານສຸຂານາໄມພືດ ເຊັ່ນ ບຳບັດກ່ອນສົ່ງອອກ ຫຼື ບຳບັດຊຸດສິນຄ້າໃນກໍລະນີສົງໄສຕິດແປດສັດຕູພືດ;
6. ຕິດຕາມຊຸດສິນຄ້າໃນລະຫວ່າງການຂົນສົ່ງ;
7. ກຳນົດເງື່ອນໄຂທາງກາຍຍະພາບເຊັ່ນ: ການໃຊ້ຕູ້ປັບອາກາດ, ການຫຸ້ມຫໍ່, ການປົກຫຸ້ມເພື່ອກັນສັດຕູພືດ ຫຼື ນຳໃຊ້ຕູ້ຂົນສົ່ງທີ່ປ້ອງກັນການຮົ່ວຊຶມ;
8. ນຳໃຊ້ເຄື່ອງປິດລ໋ອກສະເພາະ ຂອງອົງການປ້ອງກັນພືດແຫ່ງຊາດ ສຳລັບຕູ້ຂົນສົ່ງ ຫຼື ຊຸດສິນຄ້າ;
9. ຈຳກັດເວລາຂົນສົ່ງ ຫຼື ລະດູການ;
10. ກວດກາຊຸດສິນຄ້າທີ່ສົ່ງຜ່ານດ່ານກັກກັນພືດ;
11. ກຳຈັດສິ່ງເສດເຫຼືອ;
12. ນຳໃຊ້ມາດຕະການອື່ນທີ່ຈຳເປັນ ເພື່ອຮັບປະກັນດ້ານຄວາມປອດໄພ ແລະ ຄວາມຖືກຕ້ອງດ້ານສຸຂານາໄມພືດ.

ຜູ້ສົ່ງຜ່ານ ຕ້ອງປະຕິບັດຕາມມາດຕະການສຸຂານາໄມພືດ ທີ່ກຳນົດໄວ້ໃນບົດແນະນຳ ຂອງກົມປູກຝັງ.

**ມາດຕາ 34 ການປະຕິບັດມາດຕະການສຸຂານາໄມພືດສຸກເສີນຕໍ່ຊຸດສິນຄ້າ**

ໃນກໍລະນີ ທີ່ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ມີຫຼັກຖານສະແດງໃຫ້ເຫັນວ່າ ຄວາມຖືກຕ້ອງດ້ານສຸຂານາໄມພືດຂອງຊຸດສິນຄ້າ ມີການປ່ຽນແປງ ຫຼື ກວດພົບສັດຕູພືດໃນຊຸດສິນຄ້າສົ່ງຜ່ານ, ພັດສະດຸຫຸ້ມຫໍ່ ຫຼື ພາຫະນະຂົນສົ່ງ ຕ້ອງປະຕິບັດມາດຕະການສຸຂານາໄມພືດ ຕາມທີ່ກຳນົດໄວ້ໃນມາດຕາ 24 ແລະ 25 ຂອງຂໍ້ຕົກລົງສະບັບນີ້.

ໃນກໍລະນີ ທີ່ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ນຳໃຊ້ການປະຕິບັດດ້ານສຸຂານາໄມພືດຕໍ່ຊຸດສິນຄ້າສົ່ງຜ່ານ ຕ້ອງແຈ້ງໃຫ້ຜູ້ດຳເນີນການສົ່ງຜ່ານພາຍໃນ ຊາວສີ່ຊົ່ວໂມງ ແລະ ສະແດງຫຼັກຖານທີ່ປະຕິບັດມາດຕະການສຸຂານາໄມພືດດັ່ງກ່າວ ລວມທັງຜົນໄດ້ຮັບ ແລະ ກໍລະນີຄວາມບໍ່ຖືກຕ້ອງ.

**ມາດຕາ 35 ຖານຂໍ້ມູນດ້ານສຸຂານາໄມພືດໃນການນຳເຂົ້າ ແລະ ສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ**

ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຮັບຜິດຊອບສັງລວມ ແລະ ເກັບຮັກສາຂໍ້ມູນ ກ່ຽວກັບ ການນຳເຂົ້າ ແລະ ສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ປະເພດ ແລະ ປະລິມານຂອງຊຸດສິນຄ້າ;
2. ໃບຢັ້ງຢືນສຸຂານາໄມພືດຂອງປະເທດສົ່ງອອກ, ໃບອະນຸຍາດນຳເຂົ້າ ແລະ ໃບອະນຸຍາດສົ່ງຜ່ານຂອງ ສປປ ລາວ;
3. ບົດລາຍງານ ການກວດກາດ້ານສຸຂານາໄມພືດ ແລະ ບົດບັນທຶກຜົນຂອງການກວດກາ, ການເກັບຕົວຢ່າງ ແລະ ການທົດສອບ ລວມທັງເອກະສານ ກ່ຽວກັບ ການວິໄຈຄວາມສ່ຽງສັດຕູພືດ;
4. ບັນຊີຜູ້ນຳເຂົ້າ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ຂອງ ສປປ ລາວ;
5. ບົດບັນທຶກ ກ່ຽວກັບ ການປະຕິບັດດ້ານສຸຂານາໄມພືດ;
6. ການລະເມີດຂໍ້ກຳນົດເງື່ອນໄຂດ້ານສຸຂານາໄມພືດ ແລະ ກໍລະນີອື່ນ;
7. ສະຫຼຸບ ແລະ ສັງລວມສິ່ງທີ່ໄດ້ເກີດຂຶ້ນ ແລະ ມາດຕະການສຸຂານາໄມພືດທີ່ນຳໃຊ້ໂດຍຜູ້ນຳເຂົ້າເພື່ອປ້ອງກັນຄວາມສ່ຽງສັດຕູພືດ;
8. ວັນ, ເດືອນ, ປີ ແລະ ວິທີການຂົນສົ່ງຊຸດສິນຄ້າ ລວມທັງເສັ້ນທາງຂົນສົ່ງຊຸດສິນຄ້ານຳເຂົ້າ;
9. ຂໍ້ມູນດ້ານສຸຂານາໄມພືດອື່ນທີ່ກ່ຽວຂ້ອງ.

ນອກຈາກນີ້, ຕ້ອງເກັບກຳ ແລະ ບັນທຶກຂໍ້ມູນ ກ່ຽວກັບ ຊຸດສິນຄ້າທີ່ນຳເຂົ້າ ເພື່ອເປັນບ່ອນອີງໃນການຈັດການລະບົບຄຸ້ມຄອງການນຳເຂົ້າ ດັ່ງນີ້:

- ເປົ້າໝາຍການນຳໃຊ້;
- ການກັກ, ແຍກປ່ຽວ ພາຍຫຼັງການນຳເຂົ້າ ຫຼື ວິທີການບຳບັດ;
- ການກວດກາ ແລະ ຕິດຕາມສັດຕູພືດທີ່ຈຳເປັນ ຕາມຄວາມສ່ຽງສັດຕູພືດ.

# ໝວດທີ 6
# ສິດ ແລະ ພັນທະ ຂອງ ຜູ້ນຳເຂົ້າ ແລະ ສົ່ງຜ່ານ

**ມາດຕາ 36 ສິດ ຂອງ ຜູ້ນຳເຂົ້າ ແລະ ສົ່ງຜ່ານ**

ນອກຈາກ ສິດ ແລະ ພັນທະ ທີ່ກຳນົດໄວ້ໃນມາດຕາ 57 ຂອງກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ (ສະບັບປັບປຸງ) ແລ້ວ, ຜູ້ນຳເຂົ້າ ແລະ ສົ່ງຜ່ານ ຍັງມີ ສິດ ດັ່ງນີ້:

1. ດຳເນີນທຸລະກິດຂອງຕົນ ກ່ຽວກັບ ການນຳເຂົ້າ ແລະ ສົ່ງຜ່ານ ໃຫ້ຖືກຕ້ອງຕາມການອະນຸຍາດ, ມາດຕະຖານເຕັກນິກ, ກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ;
2. ໄດ້ຮັບຂໍ້ມູນ ກ່ຽວກັບ ມາດຕະການສຸຂານາໄມພືດ ທີ່ເປັນຂໍ້ບັງຄັບ ຊຶ່ງກຳນົດໂດຍອົງການຄຸ້ມຄອງວຽກງານປ້ອງກັນ ແລະ ກັກກັນພືດ;
3. ຂໍຂໍ້ມູນການກວດກາ ຈາກເຈົ້າໜ້າທີ່ກັກກັນພືດປະຈຳດ່ານກັກກັນພືດ;
4. ປ້ອງກັນບໍ່ໃຫ້ຜູ້ອື່ນ ເປີດເຜີຍ, ຄອບຄອງ ຫຼື ນຳໃຊ້ ຂໍ້ມູນຄວາມລັບທາງການຄ້າຂອງຕົນ;
5. ຮ້ອງທຸກ ຕໍ່ອົງການທີ່ກ່ຽວຂ້ອງ ກ່ຽວກັບ ການລະເມີດກົດໝາຍ ແລະ ລະບຽບການ ຂອງພະນັກງານ ແລະ ເຈົ້າໜ້າທີ່ກັກກັນພືດ.

**ມາດຕາ 37 ພັນທະ ຂອງ ຜູ້ນຳເຂົ້າ ແລະ ສົ່ງຜ່ານ**

ນອກຈາກ ສິດ ແລະ ພັນທະ ທີ່ກຳນົດໄວ້ໃນມາດຕາ 57 ຂອງກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ (ສະບັບປັບປຸງ) ແລ້ວ, ຜູ້ນຳເຂົ້າ ແລະ ສົ່ງຜ່ານ ຍັງມີ ພັນທະ ດັ່ງນີ້:

1. ແຈ້ງໃຫ້ກົມປູກຝັງຊາບ ກ່ຽວກັບ ວັນ, ເດືອນ, ປີທີ່ນຳເຂົ້າຊຸດສິນຄ້າ;
2. ເປັນເຈົ້າການ ກັກກັນ, ຄວບຄຸມ, ກຳຈັດສັດຕູພືດ, ຂ້າເຊື້ອພະຍາດພືດ ພ້ອມທັງນຳໃຊ້ທຸກວິທີການເພື່ອສະກັດກັ້ນ ແລະ ແກ້ໄຂປະກົດການ ທີ່ເປັນສາເຫດໃຫ້ເກີດການແຜ່ລະບາດຂອງສັດຕູພືດ ໃນລະຫວ່າງ ການນຳເຂົ້າ ຫຼື ສົ່ງຜ່ານພືດ;
3. ບໍ່ປ່ອຍ ຫຼື ປົນຊຸດສິນຄ້າ ໃນໄລຍະເວລາການກັກກັນພາຍຫຼັງການນຳເຂົ້າ, ຍົກເວັ້ນມີການອະນຸຍາດຢ່າງເປັນລາຍລັກອັກສອນ ຈາກກົມປູກຝັງ;
4. ໃຫ້ຄວາມຮ່ວມມືແກ່ ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຫຼື ດ່ານກັກກັນພືດ ເຂົ້າເຖິງສະຖານທີ່ກັກແຍກປ່ຽວໄດ້ ຫຼື ປະຕິບັດ ຕາມບົດແນະນຳຂອງກົມປູກຝັງ ກ່ຽວກັບ ສະຖານທີ່ກັກກັນດັ່ງກ່າວ ຫຼື ນຳໃຊ້ມາດຕະການສຸຂານາໄມພືດ ຕໍ່ຊຸດສິນຄ້າທີ່ນຳເຂົ້ານັ້ນ;
5. ເກັບຮັກສາຊຸດກວດກາທີ່ກຳນົດລາຍການໄວ້ເພື່ອຊ່ວຍໃນການກວດກາ ແລະ ຮັບປະກັນການປ້ອງກັນພືດທີ່ເໝາະສົມ ແລະ ບັນທຶກຂໍ້ມູນໃນສອນກ້າ;
6. ຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ ກ່ຽວກັບ ການກວດກາຫຼັງການນຳເຂົ້າ.

## ໝວດທີ 7
## ຂໍ້ຫ້າມ

**ມາດຕາ 38 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1 ນຳເອົາພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ເປັນອັນຕະລາຍ ຕໍ່ ພືດ, ຄົນ, ສັດ ແລະ ສິ່ງແວດລ້ອມ ເຂົ້າ ຫຼື ສົ່ງຜ່ານ ສປປ ລາວ;

2. ນຳເຂົ້າ, ສົ່ງຜ່ານ, ເຄື່ອນຍ້າຍ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ໂດຍບໍ່ໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງວຽກງານປ້ອງກັນ ແລະ ກັກກັນພືດ;

3. ນຳເຂົ້າ, ສົ່ງຜ່ານ, ຂະຫຍາຍ ຫຼື ມີໄວ້ໃນຄອບຄອງສັດຕູພືດຄວບຄຸມ ໂດຍບໍ່ໄດ້ຮັບອະນຸຍາດ;

4. ດຳເນີນທຸລະກິດ ນຳເຂົ້າ ຫຼື ສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ໂດຍບໍ່ໄດ້ຮັບອະນຸຍາດ;

5. ອອກໃບອະນຸຍາດນຳເຂົ້າ ຫຼື ສົ່ງຜ່ານ ໂດຍບໍ່ໄດ້ຮັບມອບໝາຍ;

6. ໃຫ້ສິນບົນ ແລະ ຂໍ້ມູນທີ່ບໍ່ຖືກຕ້ອງ ຕໍ່ພະນັກງານ ແລະ ເຈົ້າໜ້າທີ່ກັກກັນພືດ, ປອມແປງເອກະສານ ແລະ ປະທັບຕາ ກ່ຽວກັບ ການປ້ອງກັນ ແລະ ກັກກັນພືດ;

7. ນາບຂູ່, ກົດໜ່ວງຖ່ວງດຶງ ແລະ ຂັດຂວາງການປະຕິບັດໜ້າທີ່ ຂອງພະນັກງານ ແລະ ເຈົ້າໜ້າທີ່ກັກກັນພືດ;

8. ໂຄສະນາ ກ່ຽວກັບ ວຽກງານນຳເຂົ້າ ແລະ ສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ເກີນຄວາມເປັນຈິງ;

9. ຫຼຸດ ຫຼື ເພີ່ມ ປະລິມານຊຸດສິນຄ້າ ຫຼື ປ່ຽນແປງປະພດສິນຄ້າ ພາຍຫຼັງການຢັ້ງຢືນສຸຂານາໄມພືດ ໄດ້ຮັບອະຍາດ ໃຫ້ນຳເຂົ້າ ຫຼື ສົ່ງຜ່ານ;

10. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 39 ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່ກັກກັນພືດ**

ນອກຈາກຂໍ້ຫ້າມທົ່ວໄປ ທີ່ກຳນົດໄວ້ໃນມາດຕາ 38 ຂອງຂໍ້ຕົກລົງສະບັບນີ້ ຫ້າມ ພະນັກງານ ແລະ ເຈົ້າໜ້າທີ່ກັກກັນພືດ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ສິດ, ໜ້າທີ່ ແລະ ຕຳແໜ່ງ, ຮັບສິນບົນ, ສ້າງຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດ ຂອງລັດ, ລວມໝູ່ ຫຼື ບຸກຄົນ;

2. ເປີດເຜີຍຄວາມລັບ ຂອງ ລັດ ຫຼື ທາງລັດຖະການ ລວມທັງຂໍ້ມູນຂອງຜູ້ປະກອບການ;

3. ປອມແປງເອກະສານ ຫຼື ເອກະສານບໍ່ຖືກຕ້ອງ ຕາມລະບຽບການ;

4. ອອກໃບຢັ້ງຢືນສຸຂານາໄມພືດ ພາຍຫຼັງສົ່ງອອກສິນຄ້າ;

5. ຂາດຄວາມຮັບຜິດຊອບ ຫຼື ປະຕິບັດໜ້າທີ່ດ້ວຍຄວາມປະໝາດ ທີ່ກໍ່ໃຫ້ເກີດຄວາມເສຍຫາຍ;

6. ເມີນເສີຍຕໍ່ລະບຽບການ, ຫຼັກການໃນການກວດກາ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ, ແກ້ໄຂວຽກງານ ໂດຍບໍ່ຖືກຕ້ອງຕາມມາດຕະການເຕັກນິກ;

7. ເພີ່ມ ຫຼື ຫຼຸດ ອັດຕາຄ່າທຳນຽມ, ຄ່າບໍລິການວິຊາການ ຫຼື ນຳໃຊ້ລາຍຮັບດັ່ງກ່າວ;

8. ພົວພັນ ດ້ານການເງິນ, ສ່ວນຕົວ ແລະ ຜົນປະໂຫຍດ ໃນການຂຶ້ນທະບຽນສະຖານທີ່ປະກອບການຜະລິດ, ອອກໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກ ຫຼື ໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກຕໍ່;

9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

# ໝວດທີ 8
# ການຄຸ້ມຄອງການນຳເຂົ້າ ແລະ ສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ

**ມາດຕາ 40 ການຄຸ້ມຄອງການນຳເຂົ້າ ແລະ ສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ**

ກະຊວງກະສິກຳ ແລະ ປ່າໄມ້ ຄຸ້ມຄອງການນຳເຂົ້າ ແລະ ສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກົມປູກຝັງ ເປັນເຈົ້າການຮັບຜິດຊອບໂດຍກົງ ແລະ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເປັນຕົ້ນ ຂະແໜງການອຸດສາຫະກຳ ແລະ ການຄ້າ, ສາທາລະນະສຸກ, ການເງິນ, ປ້ອງກັນຄວາມສະຫງົບ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງການນຳເຂົ້າ ແລະ ສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານປ້ອງກັນພືດ ແລະ ກັກກັນພືດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 67 ຂອງກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ (ສະບັບປັບປຸງ) ຊຶ່ງປະກອບດ້ວຍ:

1. ກະຊວງກະສິກຳ ແລະ ປ່າໄມ້ ໂດຍແມ່ນ ກົມປູກຝັງ ເປັນເສນາທິການ;
2. ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ໂດຍແມ່ນ ຂະແໜງປູກຝັງ ເປັນເສນາທິການ;
3. ດ່ານກັກກັນພືດສາກົນ.

**ມາດຕາ 41 ສິດ ແລະ ໜ້າທີ່ ຂອງ ກົມປູກຝັງ**

ໃນການຄຸ້ມຄອງການນຳເຂົ້າ ແລະ ສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ ມີ ສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ສ້າງຄູ່ມື ແລະ ບົດແນະນຳ ໃນການຈັດຕັ້ງປະຕິບັດລະບົບຄຸ້ມຄອງການນຳເຂົ້າ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ໃຫ້ມີຄວາມເອກະພາບ ໃນຂອບເຂດທົ່ວປະເທດ;
2. ໂຄສະນາເຜີຍແຜ່ຂໍ້ມູນ ຂ່າວສານ ກ່ຽວກັບ ເງື່ອນໄຂ ແລະ ລະບຽບການ ນຳເຂົ້າ ແລະ ສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ດ້ວຍຫຼາຍຮູບການ ເປັນຕົ້ນ ຈົດໝາຍເຫດທາງລັດຖະການ, ເວັບໄຊຂອງກົມປູກຝັງ, ວິທະຍຸ, ໜັງສືພິມ, ຕິດປະກາດຢູ່ດ່ານນຳເຂົ້າ, ປ່ອງເອກະສານຂາອອກ-ຂາເຂົ້າ ຂອງກົມປູກຝັງ, ສະຖານທີ່ສາທາລະນະອື່ນ ທີ່ກ່ຽວຂ້ອງ;
3. ດຳເນີນການວິໄຈຄວາມສ່ຽງສັດຕູພືດ ຫຼື ຮັບຮອງເອົາ ເງື່ອນໄຂດ້ານສຸຂານາໄມພືດ ສຳລັບການນຳເຂົ້າທີ່ເຫັນວ່າເທົ່າທຽມກັບປະເທດຄູ່ຄ້າ ຫຼື ພາກພື້ນ, ສ້າງບັນຊີສັດຕູພືດກັກກັນ, ບັນຊີສັດຕູພືດຄວບຄຸມ, ບັນຊີພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ຕ້ອງຂໍອະນຸຍາດນຳເຂົ້າ;
4. ດຳເນີນການກວດກາກ່ອນການນຳເຂົ້າຢູ່ປະເທດແຫຼ່ງກຳເນີດ;
5. ອອກ, ໂຈະ ຫຼື ຍົກເລີກ ການອະນຸຍາດນຳເຂົ້າ ແລະ ສົ່ງຜ່ານ, ສະຖານທີ່ກັກກັນພາຍຫຼັງນຳເຂົ້າ;
6. ຄົ້ນຄວ້າ ແລະ ມອບໝາຍສິດໃຫ້ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ທີ່ມີເງື່ອນໄຂໃນການອອກໃບອະນຸຍາດນຳເຂົ້າ ແລະ ສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຄວບຄຸມ ທີ່ບໍ່ນອນຢູ່ໃນບັນຊີທີ່ຕ້ອງຂໍອະນຸຍາດນຳເຂົ້າ ແລະ ກຳນົດດ່ານນຳເຂົ້າສະເພາະ;

7. ນຳໃຊ້ມາດຕະການສຸຂານາໄມພືດ ຕໍ່ກັບຊຸດສິນຄ້າ ແລະ ຜູ້ລະເມີດຂໍ້ກຳນົດເງື່ອນໄຂດ້ານສຸຂານາໄມພືດ ຂອງ ສປປ ລາວ ຫຼື ການປະຕິບັດດ້ານສຸຂານາໄມພືດແບບສຸກເສີນ ລວມທັງການບຳບັດຊຸດສິນຄ້າ, ການສົ່ງກັບຄືນປະເທດສົ່ງອອກ ຫຼື ທຳລາຍຖິ້ມ ຕາມຫຼັກວິຊາການ;
8. ແຈ້ງ ແລະ ປະສານສົມທົບສອງຝ່າຍ ກັບ ເລຂາທິການສົນທິສັນຍາປ້ອງກັນພືດສາກົນ (IPPC), ອົງການປ້ອງກັນພືດແຫ່ງຊາດ (NPPO) ຂອງປະເທດສົ່ງອອກ, ອົງການປ້ອງກັນພືດພາກພື້ນ ໃນກໍລະນີ ທີ່ຕ້ອງໄດ້ປະຕິບັດມາດຕະການສຸຂານາໄມພືດ ແລະ ແຈ້ງກໍລະນີທີ່ບໍ່ສອດຄ່ອງໃຫ້ປະເທດຄູ່ຄ້າຊາບ;
9. ຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ບຸກຄະລາກອນ ຜູ້ທີ່ຮັບຜິດຊອບວຽກງານຄຸ້ມຄອງການນຳເຂົ້າ ແລະ ສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ;
10. ຊີ້ນຳ, ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານການນຳເຂົ້າ ແລະ ສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ໃນຂອບເຂດທົ່ວປະເທດ;
11. ແຈ້ງໃຫ້ປະເທດພາຄີຂອງສົນທິສັນຍາປ້ອງກັນພືດສາກົນ (IPPC) ກ່ຽວກັບ ກໍລະນີມີການລະເມີດຂໍ້ກຳນົດເງື່ອນໄຂດ້ານສຸຂານາໄມພືດ ໃນການນຳເຂົ້າ, ການກວດພົບສັດຕູພືດກັກກັນ ຫຼື ສັດຕູພືດທີ່ບໍ່ກັກກັນແຕ່ຕ້ອງຄວບຄຸມ ແລະ ການປະຕິບັດ ມາດຕະການສຸຂານາໄມພືດສຸກເສີນ;
12. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານການນຳເຂົ້າ ແລະ ສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ໃຫ້ການນຳກະຊວງກະສິກຳ ແລະ ປ່າໄມ້ ຢ່າງເປັນລະບົບ ແລະ ຕໍ່ເນື່ອງ;
13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 42 ສິດ ແລະ ໜ້າທີ່ ຂອງ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງການນຳເຂົ້າ ແລະ ສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ໂຄສະນາເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບ ເງື່ອນໄຂ ແລະ ລະບຽບການ ນຳເຂົ້າ ແລະ ສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ດ້ວຍຫຼາຍຮູບການ ເປັນຕົ້ນ ວິທະຍຸ, ໜັງສືພິມ, ຕິດປະກາດຢູ່ດ່ານນຳເຂົ້າ, ປ້ອງເອກະສານຂາອອກ-ຂາເຂົ້າ ຂອງພະແນກກະສິກຳ ແລະ ປ່າໄມ້, ສະຖານທີ່ສາທາລະນະອື່ນທີ່ກ່ຽວຂ້ອງ;
2. ອອກ, ໂຈະ ຫຼື ຍົກເລີກ ໃບອະນຸຍາດນຳເຂົ້າ ແລະ ສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ບໍ່ນອນໃນບັນຊີທີ່ຕ້ອງຂໍອະນຸຍາດນຳເຂົ້າ ຕາມການມອບໝາຍຂອງກົມປູກຝັງ;
3. ແຈ້ງ ແລະ ລາຍງານ ໃຫ້ກົມປູກຝັງຊາບທັນທີ ກ່ຽວກັບ ການກວດພົບຄວາມບໍ່ຖືກຕ້ອງ ແລະ ບໍ່ສອດຄ່ອງ;
4. ປະສານສົມທົບກັບພະແນກການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຂອງແຂວງ, ນະຄອນຫຼວງ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງການນຳເຂົ້າ ແລະ ສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ;
5. ຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄະລາກອນ ຜູ້ທີ່ຮັບຜິດຊອບວຽກງານຄຸ້ມຄອງການນຳເຂົ້າ ແລະ ສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ;
6. ມອບສຳເນົາບົດລາຍງານການກວດກາ ແລະ ລາຍງານເປັນແຕ່ລະໄລຍະ ໃຫ້ກົມປູກຝັງ;
7. ນຳໃຊ້ສິດ ແລະ ປະຕິບັດຕາມໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 43 ສິດ ແລະ ໜ້າທີ່ ຂອງ ດ່ານກັກກັນພືດ**

ໃນການຄຸ້ມຄອງການນຳເຂົ້າ ແລະ ສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ດ່ານກັກກັນພືດ ທີ່ໄດ້ຮັບມອບໝາຍຈາກກົມປູກຝັງ ຫຼື ອົງການປ້ອງກັນພືດແຫ່ງຊາດ ຂອງ ສປປ ລາວ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບ ດັ່ງນີ້:

1. ແຈ້ງ ແລະ ລາຍງານໃຫ້ພະແນກກະສິກຳ ແລະ ປ່າໄມ້ ແລະ ກົມປູກຝັງ ຊາບທັນທີ ກ່ຽວກັບການກວດພົບຄວາມບໍ່ຖືກຕ້ອງ ແລະ ບໍ່ສອດຄ່ອງ;
2. ດຳເນີນການສຳຫຼວດ ແລະ ກວດກາສັດຕູພືດ ໃນເວລາການນຳເຂົ້າ ພືດ, ຜະລິດຕະພັນພືດ ແລະ ວັດຖຸຄວບຄຸມ;
3. ກັກ, ແຍກປ່ຽວ, ສົ່ງຕົວຢ່າງໄປວິໄຈ, ບຳບັດ, ປະຕິເສດການນຳເຂົ້າ, ສົ່ງກັບຄືນ, ທຳລາຍ ຫຼື ນຳໃຊ້ມາດຕະການອື່ນຕໍ່ ພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມ ທີ່ມີສັດຕູພືດຄວບຄຸມ;
4. ນຳໃຊ້ມາດຕະການສຸຂານາໄມພືດຕໍ່ຊຸດສິນຄ້າ ແລະ ຜູ້ລະເມີດເງື່ອນໄຂດ້ານສຸຂານາໄມພືດ ຂອງ ສປປ ລາວ ຫຼື ການປະຕິບັດມາດຕະການສຸຂານາໄມພືດແບບສຸກເສີນ ລວມທັງການບຳບັດວັດຖຸຕ້ອງຄວບຄຸມ, ການສົ່ງກັບຄືນປະເທດສົ່ງອອກ ຫຼື ທຳລາຍຖິ້ມ;
5. ມອບສຳເນົາບົດລາຍງານການກວດກາ ແລະ ລາຍງານເປັນແຕ່ລະໄລຍະ;
6. ນຳໃຊ້ສິດ ແລະ ປະຕິບັດຕາມໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 44 ຄ່າທຳນຽມ ແລະ ຄ່າບໍລິການ**

ກົມປູກຝັງ, ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ແລະ ດ່ານກັກກັນພືດ ຕ້ອງເກັບຄ່າທຳນຽມ ແລະ ຄ່າບໍລິການ ສຳລັບການກວດກາ, ເກັບຕົວຢ່າງ, ການວິໄຈ, ການບຳບັດ, ການອອກໃບອະນຸຍາດນຳເຂົ້າ, ໃບອະນຸຍາດ ສົ່ງຜ່ານ ລວມທັງ ຄ່າທຳນຽມ ແລະ ຄ່າບໍລິການອື່ນ ກ່ຽວກັບ ການນຳເຂົ້າ ແລະ ສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ຕາມທີ່ໄດ້ກຳນົດໄວ້ ໃນລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 45 ການຈັດຕັ້ງປະຕິບັດ**

ກົມປູກຝັງ, ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ແລະ ດ່ານກັກກັນພືດ ເປັນເຈົ້າການ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໂດຍປະສານສົມທົບກັບຂະແໜງການ ແລະ ອົງການອື່ນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ ໃຫ້ມີປະສິດທິຜົນ.

**ມາດຕາ 46 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງເຜີຍແຜ່ໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

**ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້**

ບຸນຂວາງ ຄຳບຸນເຮືອງ